# ຢາສັກ ປ້ອງກັນ ໄວຣັສທີ່ເຮັດໃຫ້ເກີດເນື້ອງອກເຍື່ອບຸຜິວໃນມະນຸດ (HPV)

## ເຈ້ຍຂໍ້ມູນສໍາລັບພໍ່ແມ່

**ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ແນະນໍາສໍາລັບໂຄງການສັກຢາປ້ອງກັນໂຣກສໍາລັບພວກວັຍໜຸ່ມໃນໂຮງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.**

ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກ ເນື້ອ ງອກເຍື່ອບຸຜິວໃນມະນຸດ (HPV) ຈົ່ງຂຽນຕື່ມຟອມຍິນຍອມແລ້ວເອົາຟອມຍິນຍອມທີ່ທ່ານເຊັນຮັບແລ້ວໃຫ້ລູກທ່ານນໍາກັບໄປໃຫ້ໂຮງຮຽນ.
- ຖ້າທ່ານບໍ່ຕ້ອງການໃຫ້ລູກຂອງທ່ານສັກຢາປ້ອງກັນໂຣກ HPV, ບໍ່ຕ້ອງໃຫ້ຄວາມຍິນຍອມ.

### ຖ. HPV ແມ່ນຫຍັງ ແລະ ມັນແພ່ຜາຍໄດ້ຢ່າງໃດ?

ໄວຣັສເນື້ອງອກເຍື່ອບຸຜິວໃນມະນຸດ (HPV) ເປັນໄວຣັສທີ່ມີຜົນກະທົບຕໍ່ທັງເພດຍິງແລະເພດຊາຍ. HPV ແພ່ຜາຍຜ່ານ ການສໍາຜັດດອະໄວຍະວະເພດໃນຂະນະທີ່ມີເພດສໍາພັນກັບ ຄົນທີ່ມີເຊື້ອໄວຣັສນີ້ແລ້ວ. ເຊື້ອໄວຣັສນີ້ຈະຜ່ານເຂົ້າໄປທາງຜິວໜັງທີ່ຂາດພຽງເລັກນ້ອຍ ແລະ ບໍ່ສາມາດແພ່ຜາຍທາງເລືອດ ຫຼື ທາງນໍ້າອື່ນໆຂອງຮ່າງກາຍ. ຖົງອະນາໄມສາມາດປ້ອງກັນໄດ້ແຕ່ພຽງບາງສ່ວນ ເພາະ ວ່າ ມັນບໍ່ຫໍ່ເອົາຜິວໜັງທຸກໆບ່ອນຂອງອະວັຍວະເພດ.

ບໍ່ແມ່ນ HPV ທຸກປະເພດຈະເຮັດໃຫ້ເກີດອາການທີ່ເບິ່ງເຫັນໄດ້. ຫຼາຍຄົນທີ່ມີການຕິດເຊື້ອ HPV ຈະບໍ່ຮູ້ເລື້ອງນີ້.

HPV ບາງຊະນິດ ສາມາດເຮັດໃຫ້ເກີດຕຸ່ມຢູ່ສ່ວນໃດສ່ວນໜຶ່ງຂອງຮ່າງກາຍ. ນີ້ລວມເຖິງບໍລິເວນອະໄວຍະວະເພດ (ປາກຊ່ອງຄອດ, ຊ່ອງຄອດ, ປາກມົດລູກ, ອະໄວຍະວະເພດຊາຍ, ໝ່ວຍອັນທະ, ຮູທະວານ, ແລະ ບໍລິເວນທີ່ຢູ່ລະຫວ່າງທະວານໜັກແລະອະໄວຍະວະເພດ(perineum)). ປົກກະຕິແລ້ວຕຸ່ມມັກຈະບໍ່ເຈັບປວດ, ແຕ່ບາງຄັ້ງກໍ່ເຮັດໃຫ້ເກີດອາການຄັນ ຫຼື ບໍ່ສະບາຍຕົວ. ປະເພດຂອງ HPV ທີ່ເຮັດໃຫ້ເກີດຕຸ່ມແມ່ນເອີ້ນວ່າ 'ຄວາມສ່ຽງຕໍ່າ' ເພາະວ່າພວກມັນບໍ່ກ່ຽວຂ້ອງກັບມະເຮັງ.

HPV ຊະນິດອື່ນໆແມ່ນເອີ້ນວ່າ 'ຄວາມສ່ຽງສູງ' ເພາະວ່າພວກມັນສາມາດເຮັດໃຫ້ຈຸລັງກ່ອນເປັນມະເຮັງຂະຫຍາຍ ຕົວໄດ້. ຈຸລັງເຫຼົ່ານີ້ອາດຈະກາຍເປັນມະເຮັງຖ້າປະໄວ້ໂດຍບໍ່ໄດ້ຮັບການປິ່ນປົວ.

HPV ທີ່ມີຄວາມສ່ຽງສູງມີສ່ວນເຮັດໃຫ້ເກີດມະເຮັງ 5% ທົ່ວໂລກ, ລວມທັງ:

- ເກືອບໝົດທຸກກໍລະນີຂອງມະເຮັງປາກມົດລູກ
- 90% ຂອງມະເຮັງທະວານໜັກ
- 78% ຂອງມະເຮັງທີ່ອະວັຍວະເພດຍິງ
- 60% ຂອງມະເຮັງຄໍ (ມະເຮັງຢູ່ດ້ານຫຼັງຂອງຮູຄໍ, ລີ້ນ ແລະ ຕ່ອມທອນຊິລ)
- 25% ຂອງມະເຮັງປາກຊ່ອງຄອດ
- 50% ຂອງມະເຮັງທີ່ອະວັຍວະເພດຊາຍ

ການສັກຢາໃຫ້ຜູ້ຊາຍຈະຊ່ວຍປ້ອງກັນການເປັນມະເຮັງ ໃນ ຜູ້ຊາຍ ແລະ ການເປັນຫູດທີ່ອະວັຍວະເພດ ແລະ ສິ່ງສໍາຄັນທີ່ສຸດ ມັນຍັງຈະຊ່ວຍປ້ອງກັນພວກຜູ້ຍິງຈາກການເປັນໂຣກມະເຮັງປາກມົດລູກອີກດ້ວຍ.

### ຖ. ຢາວັກຊີນທໍາງານຢ່າງໃດ?

ຢາວັກຊີນທໍາງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສໍາຜັດກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດຕອບຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະຫຍາຍຕົວຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

### ຖ. ຢາວັກຊີນໃດທີ່ຈະຖືກນໍາໃຊ້?

ຢາວັກຊີນປ້ອງກັນໂຣກ HPV ອັນດຽວ ທີ່ປ້ອງກັນໂຣກ HPV 9 ປະເພດ (6, 11, 16, 18, 31, 33, 45, 52 ແລະ 58).

### ຖ. ລູກຂ້ອຍຕ້ອງສັກຢາປ້ອງກັນໂຣກ HPV ຈັກເຂັມ?

ການຄົ້ນຄວ້າສາກົນສະແດງໃຫ້ເຫັນວ່າຢາວັກຊີນ HPV ເຂັມໜຶ່ງໃຫ້ການປົກປ້ອງຄືກັນກັບການສັກສອງເຂັມ. ອີງຕາມຫຼັກຖານນີ້, ກຸ່ມທີ່ປຶກສາດ້ານວິຊາການຂອງອອສເຕຣເລັຍກ່ຽວກັບການສັກຢາກັນໂຣກ (ATAGI) ໄດ້ແນະນໍາໃຫ້ອອສເຕຣເລັຍຫັນປ່ຽນໄປສູ່ຕາຕະລາງວັກຊີນ HPV ຄັ້ງດຽວໃນປີ 2023.

ວັຍລຸ້ນບາງຄົນທີ່ມີພູມຕ້ານທານບົກພ່ອງຢ່າງຫຼວງຫຼາຍແມ່ນແນະນໍາໃຫ້ສັກວັກຊີນ HPV ສາມເຂັມ. ຕາຕະລາງຂະໜາດຢາ 3ເຂັມ ຕ້ອງໃຫ້ມີຊ່ວງເວລາຫ່າງກັນ 2 ເດືອນລະຫວ່າງຢາ ເຂັມ1 ແລະເຂັມ 2, ແລະ 4 ເດືອນລະຫວ່າງເຂັມ2 ແລະ ເຂັມ 3.

ພາວະພູມຕ້ານທານບົກພ່ອງທີ່ສໍາຄັນແມ່ນໝາຍເຖິງຜູ້ທີ່ມີ:

- ພູມຕ້ານທານຂັ້ນຕົ້ນ ຫຼືຮອງ (ສານຕໍ່ຕ້ານເຊື້ອໂຣກໃນຮ່າງກາຍ ເມັດເລືອດຂາວ B ແລະ ເມັດເລືອດຂາວ T ບົກພ່ອງທັງໝົດ ຫຼືບາງສ່ວນ)
- ການຕິດເຊື້ອ HIV
- ຄົນທີ່ເປັນມະເຮັງ
- ການປູກຖ່າຍອະໄວຍະວະ
- ໂຣກແພ້ພູມຄຸ້ມກັນຕົວເອງ
- ການປິ່ນປົວດ້ວຍການກົດພູມຕ້ານທານທີ່ສໍາຄັນ (ບໍ່ລວມ asplenia ຫຼື hyposplenia).

### ຖ. ຈະເປັນແນວໃດກັບວັຍລຸ້ນທີ່ໄດ້ສັກຢາເຂັມໜຶ່ງແລ້ວ?

ບັນດານັກຮຽນທີ່ໄດ້ຮັບວັກຊີນ HPV 1ເຂັມແລ້ວ ບໍ່ຈຳເປັນຕ້ອງສັກເຂັມທີສອງ. ພວກເຂົາໄດ້ຖືກພິຈາລະນາວ່າໄດ້ຮັບການສັກຢາປ້ອງກັນເຖິງປັດຈຸບັນແລະຢ່າງເຕັມ ແລ້ວ.

**ການກວດປາກມົດລູກແບບກັ່ນກອງຢ່າງສມ່ຳ ສເມີ (ແຕ່ກ່ອນເອີ້ນວ່າແພັບສະເມັຍ) ກໍຍັງເປັນສິ່ງສຳຄັນ ສຳລັບບັນດາຜູ້ຍິງທີ່ໄດ້ຮັບການສັກຢາແລ້ວ, ເພາະວ່າວັກຊີນ ປ້ອງກັນໂຣກ HPV ນີ້ບໍ່ປ້ອງກັນທຸກໆປະເພດຂອງໂຣກ HPV ທີ່ສາມາດກໍ່ໃຫ້ເກີດໂຣກມະເຮັງປາກມົດລູກໄດ້. ຜູ້ຍິງ ໝົດ ທຸກຄົນທີ່ມີອາຍຸຈາກ25ປີທີ່ເຄີຍມີເພດສຳພັນມາແລ້ວ ຄວນມີການກວດປາກມົດລູກແບບກັ່ນກອງໃນທຸກໆ 5 ປີ, ໂດຍ ບໍ່ຄຳນຶງເຖິງສະຖານະການສັກຢາປ້ອງກັນໂຣກ HPV ຂອງ ພວກເຂົາ.**

### ຖ. ໃຜຄວນສັກວັກຊີນ?

ນັກຮຽນທຸກໆຄົນທີ່ຢູ່ຊັ້ນ ປີ 7 ແລະ ສູນພາສາອັງກິດແບບເລັ່ງລັດທັງໝົດ ຕັ້ງແຕ່ອາຍຸ 12 ປີ ຄວນໄດ້ຮັບວັກຊີນ HPV ຂະໜາດດຽວ. ສຳລັບຂໍ້ມູນເພີ່ມເຕີມ, ຕິດຕໍ່ທ້ອງຖິ່ນຂອງທ່ານສາທາລະນະສຸກ **1300 066 055.**

### ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາວັກຊີນ HPV ບໍ່ຄວນສັກໃຫ້ຜູ້ທີ່:

- ຖືພາ ຫຼື ອາດຈະຖືພາ
- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຕໍ່ສ່ວນປະສົມໃດນຶ່ງຂອງຢາສັກ (ຈັດເປັນລາຍການຢູ່ຂ້າງລຸ່ມ)
- ເຄີຍມີປວັດອາການແພ້ອັນຮຸນແຮງຕໍ່ເຊື້ອຢີດສ໌

### ຖ. ຢາວັກຊີນມີປະສິດທິຜົນເທົ່າໃດ?

ຢາສັກປ້ອງກັນໂຣກນີ້ປ້ອງກັນການຕິດເຊື້ອປະເພດສຳຄັນຕ່າງໆຂອງໂຣກ HPV ທີ່ກໍ່ໃຫ້ເກີດເປັນໂຣກມະເຮັງປາກມົດລູກຫຼາຍກວ່າ 90 ສ່ວນຮ້ອຍ ໃນບັນດາຜູ້ຍິງແລະ ນອກ ຈາກນີ້ກໍຍັງປ້ອງກັນການຕິດເຊື້ອປະເພດ ອື່ນໆ ຕື່ມຂອງໂຣກ HPV ທີ່ກໍ່ໃຫ້ເກີດເປັນໂຣກມະເຮັງໃນບັນດາຜູ້ຊາຍອີກດ້ວຍ.

ການຄົ້ນຄວ້າຫຼ້າສຸດສະແດງໃຫ້ເຫັນວ່າວັກຊີນດັ່ງກ່າວຍັງໃຫ້ການປ້ອງກັນເກືອບເຖິງ 100% ຫຼາຍກວ່າ 10 ປີຫລັງຈາກໄດ້ສັກຢາແລ້ວ. ນັບຕັ້ງແຕ່ການແນະນຳໂຄງການການສັກຢາປ້ອງກັນ HPV ແຫ່ງຊາດ (ໃນປີ 2007 ສຳລັບແມ່ຍິງແລະ 2013 ສຳລັບຜູ້ຊາຍ) ປະກົດການຂອງ:

- ຄວາມຜິດປົກກະຕິຂອງປາກມົດລູກລະດັບສູງໃນກຸ່ມອາຍຸທີ່ມີສິດໄດ້ຮັບວັກຊີນຫຼຸດລົງເກືອບ 50%
- ຕຸ່ມຢູ່ອະໄວຍະວະເພດໃນວັຍໜຸ່ມສາວ (ຕ່ຳກວ່າ 21 ປີ) ຫຼຸດລົງ 90%.

ຍ້ອນວ່າມະເຮັງປາກມົດລູກມັກຈະພັດທະນາໃນໄລຍະ 10 ປີ ຫຼື ຫຼາຍກວ່ານັ້ນ, ບົດບາດຂອງຢາວັກຊີນໃນການຫຼຸດຜ່ອນມະເຮັງປາກມົດລູກຈະບໍ່ປາກົດຜົນໃຫ້ເຫັນ ເປັນເວລາດົນພໍຄວນ.

ອຸບັດການຂອງມະເຮັງປາກມົດລູກໄດ້ຫຼຸດລົງຢ່າງຫຼວງຫຼາຍນັບຕັ້ງແຕ່ໂຄງການກວດພະຍາດປາກມົດລູກແບບຄັດກອງແຫ່ງຊາດໄດ້ເລີ່ມຕົ້ນໃນປີ 1991 ແລະ ໂຄງການວັກຊີນປ້ອງກັນເຊື້ອໄວຣັສ Papilloma Virus (HPV) ແຫ່ງຊາດໄດ້ຖືກນຳສະເໜີໃນປີ 2007.

### ຖ. ຖ້າຂ້ອຍຢາກລໍຖ້າຈົນກວ່າລູກຊາຍຂ້ອຍໃຫຍ່ກວ່ານີ້ເດຈະເປັນຫຍັງບໍ່?

ການສັກຢາປ້ອງກັນໂຣກ HPV ນີ້ຈະມີປະສິດ ທິພາບຫຼາຍທີ່ສຸດໃນເມື່ອສັກໃຫ້ຄົນວັຍໜຸ່ມກ່ອນທີ່ພວກເຂົາເຈົ້າຈະມີເພດສຳພັນ. ຢາສັກນີ້ສາມາດເອົາໃຫ້ໄດ້ຢູ່ພຽງແຕ່ໃນໂຮງຮຽນດ້ວຍການສົ່ງຕົ້ນສບັບຟອມຍິນຍອມໃນຂະນະທີ່ລູກທ່ານຮຽນຢູ່ໂຮງຮຽນ. ຖ້າທ່ານເລືອກທີ່ຈະລໍຖ້າ ຈົນກວ່າລູກທ່ານໃຫຍ່ກວ່ານີ້ ທ່ານຈະຕ້ອງເຮັດນັດໝາຍສັກຢາກັບນາຍໝໍຂອງທ່ານ ຫຼື ເພສັຊກອນພູມຕ້ານທານ.

ຖ້າສັກວັກຊີນຜ່ານຈີພີ ຫຼືນັກປຸງຢາ, ການສັກຢາວັກຊີນຈະຟຣີ, ແຕ່ທ່ານອາດຈະຕ້ອງເສັຍຄ່າການປຶກສາຫາລື.

### ຖ. ຢາສັກກັນໂຣກ HPV ບັນຈຸຫຍັງແດ່?

ຢາສັກນີ້ ບັນຈຸ ເຊື້ອຢີດສ໌ ຢາເສີມອາລູມີນຽມ sodium chloride, L-histidine, polysorbate ແລະ sodium borate. ສ່ວນປະສົມດັ່ງກ່າວນີ້ມີຢູ່ໃນຢາສັກກັນໂຣກ ປະຣິມານນ້ອຍທີ່ສຸດເພື່ອຊ່ວຍໃຫ້ຢາກັນໂຣກທຳງານ ຫຼື ທຳໜ້າທີ່ປ້ອງກັນບໍ່ໃຫ້ຢາເສັຍ.

### ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບຳບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນຳໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນຳໃຊ້ອີກດ້ວຍ.

### ຖ. ອາການຂ້າງຄຽງຂອງການສັກຢາກັນໂຣກ ມີຫຍັງແດ່?

ອາການຂ້າງຄຽງ ມີພຽງເບົາບາງ ແລະ ຕາມປົກກະຕິແລ້ວ ຈະມີອາການເຈັບໃຄ່ ແລະ ເປັນຮອຍແດງຕາມບໍຣິເວນສັກຢາ. ອາການຂ້າງຄຽງທີ່ຮ້າຍແຮງນັ້ນມີນ້ອຍທີ່ສຸດ. ບັນດາພໍ່ແມ່ທີ່ຢູ່ໃນຣັດ NSW ທີ່ໄດ້ຖືກຕິດຕາມເບິ່ງຫຼັງຈາກທີ່ໄດ້ຮັບການສັກວັກຊີນປ້ອງກັນໂຣກ HPV ໄດ້ລາຍງານວ່າ ນັກຮຽນຕ່ຳກວ່າ 11% ມີອາການຂ້າງຄຽງທີ່ບໍ່ຮຸນແຮງ ໃນຂະນະທີ່ມີພຽງ 0.5% ເທົ່ານັ້ນ ທີ່ຕ້ອງການການຮັກສາພະຍາບານ. ຂໍ້ມູນເພີ່ມເຕີມກ່ຽວກັບອາການຂ້າງຄຽງຕ່າງໆ ມີໄວ້ໃຫ້ທີ່ ກອງຂໍ້ມູນເລື້ອງຢາສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

### ຖ. Anaphylaxis (ອາການແພ້ຢ່າງຮຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ. ມັນຈະເກີດໄດ້ຍາກທີ່ສຸດ ຫຼັງຈາກການສັກຢາ. ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້

### ຖ. ລລູກສາວຂ້ອຍຍັງຕ້ອງມີການກວດ ປາກມົດລູກແບບຄັດກອງ ບໍ່?

ແມ່ນແລ້ວ. ການກວດປາກມົດລູກແບບກັ່ນກອງຢ່າງສມ່ຳ ສເມີ (ແຕ່ກ່ອນເອີ້ນວ່າແພັບສະເມັຍ) ກໍຍັງເປັນສິ່ງສຳຄັນ ສຳລັບບັນດາຜູ້ຍິງທີ່ໄດ້ຮັບການສັກຢາແລ້ວ, ເພາະວ່າວັກຊີນ ປ້ອງກັນໂຣກ HPV ນີ້ບໍ່ປ້ອງກັນທຸກໆປະເພດຂອງໂຣກ HPV ທີ່ສາມາດກໍ່ໃຫ້ເກີດໂຣກມະເຮັງປາກມົດລູກໄດ້.

ຜູ້ຍິງ ໝົດ ທຸກຄົນທີ່ມີອາຍຸຈາກ25ປີທີ່ເຄີຍມີເພດສຳພັນມາແລ້ວ ຄວນມີການກວດປາກມົດລູກແບບກັ່ນກອງໃນທຸກໆ 5 ປີ, ໂດຍ ບໍ່ຄຳນຶງເຖິງສະຖານະການສັກຢາປ້ອງກັນໂຣກ HPV ຂອງ ພວກເຂົາ.

**ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕິໂຊນ ຫຼື ເປຣັດນິໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?**

ຢາວັກຊີນ ສາມາດສັກໃຫ້ໃຜຜູ້ນຶ່ງທີ່ເປັນໂຣກຫືດໄດ້ໂດຍປອດໄພ ບໍ່ວ່າພວກເຂົາເຈົ້າຈະພວມກິນຢາຫຍັງ.

**ແມ່ນໃຜສາມາດຍິນຍອມຕໍ່ການສັກຢາປ້ອງກັນໂຣກ ແລະ ຈະສາມາດຖອນການຍິນຍອມໄດ້ບໍ່?**

ມີແຕ່ພໍ່ແມ່/ຜູ້ປົກຄອງເທົ່ານັ້ນທີ່ສາມາຍິນຍອມຕໍ່ການສັກ ຢາປ້ອງກັນໂຣກ ສໍາລັບນັກຮຽນທີ່ມີອາຍຸຕໍ່າກວ່າ 18 ປີ. ນັກຮຽນທີ່ມີອາຍຸ 18 ປີແລະຫຼາຍກວ່າ ອາດຈະຍິນຍອມຕໍ່ການ ສັກຢາປ້ອງກັນໂຣກຂອງຕົນເອງ ແລະ ຄວນຂຽນ ຕື່ມ ພ້ອມທັງເຊັນຟອມຍິນຍອມບ່ອນທີ່ບົ່ງບອກວ່າ 'ພໍ່ແມ່/ຜູ້ປົກຄອງ'. ການ ຍິນຍອມສາມາດຖືກຖອນຄືນໄດ້ທຸກເວລາ ໂດຍການແຈ້ງໄປຫາທາງໂຮງຮຽນເປັນ ລາຍລັກອັກສອນ ເລື້ອງການຖອນການຍິນຍອມ ຫຼື ໂທຣະສັບຫາໂຮງຮຽນເພື່ອ ຖອນການຍິນຍອມນັ້ນ.

**ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼື ຄິດວ່າລາວອາດຈະຖືພາ ບໍ?**

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນ ໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງ ວ່າ ພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່.

ຖ້າຄໍາຕອບຂອງນັກຮຽນຕໍ່ຄໍາຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນໍາໃຫ້ປຶກສາຫາລື ບັນຫານີ້ກັບພໍ່ແມ່/ຜູ້ປົກຄອງ ຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບຣາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງ ຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄໍາແນະນໍາ ການອູ້ມຊູ ແລະ ການຊີ້ນໍາ.

**ຖ. ຂ້ອຍຈະເຮັດແນວໃດຖ້າລູກຂ້ອຍພາດຈາກການສັກຢາທີ່ໂຮງຮຽນ ຍ້ອນເຈັບປ່ວຍ ຫຼື ຂາດໂຮງຮຽນໃນມື້ທີ່ພະຍາບານມາ?**

ຖ້າວ່າພາດການສັກຢາປ້ອງກັນ HPV ຢູ່ໂຮງຮຽນ, ຄວນທໍາການສັກເທົ່າທີ່ ຈະໄວໄດ້. ໂຮງຮຽນບາງແຫ່ງຈະຈັດຄລີນິກການສັກຢາໃຫ້ທັນ ຖ້າບໍ່ດັ່ງນັ້ນ ພໍ່ແມ່ຄວນຕິດຕໍ່ກັບນາຍໝໍທ້ອງຖິ່ນຂອງພວກເຂົາຫຼື ນັກປຸງຢາເພື່ອ ຈັດການສັກຢາ.

**ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?**

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນ ສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການ ສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສໍາເນົາໃບລາຍງານປະຫວັດການສັກຢາ AIR ຂອງ ລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກ ຢາດ້ວຍຕົນເອງໄດ້ດັ່ງນີ້:

- ນໍາໃຊ້ບັນຊີMedicare online ຜ່ານ myGov my.gov.au/
- ນໍາໃຊ້ແອັບ Medicare Express Plus App www.servicesaustralia.gov.au/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ **1800 653 809**.

**ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?**

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂ ໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍ ຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນ ຄໍາຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ).

ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງ ລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງ ອອສເຕຣເລັຍ (AIR) ເພື່ອ ວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກ ທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

ບັນດານັກຮຽນຍິງທີ່ໄດ້ຮັບການສັກຢາປ້ອງກັນໂຣກ HPV- ໂດຍການ ເຊັນຟອມຍິນຍອມນັ້ນ, ແມ່ນທ່ານໄດ້ຕົກລົງເຫັນດີໃນການເປີດເຜີຍ ຂໍ້ມູນກ່ຽວກັບສຸຂພາບຂອງລູກທ່ານເພື່ອການເຊື່ອມຕໍ່ເຂົ້າຫາ ໂຄງການ ລົງທະບຽນການກວດມົດລູກແຫ່ງຊາດໃນອະນາຄົດ.

**ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນ ໂຮງຮຽນໄດ້ຈາກໃສ?**

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່:www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານ ທີ່ເບີ **1300 066 055**.

# Human papillomavirus (HPV) vaccine Parent Information Sheet

October 2023 © NSW Health. SHPN (HP NSW) 230689-1-15

## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນ້ຳເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນ້ຳຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນ້ຳເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນ້ຳຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


220730-2-15



NSW GOVERNMENT

# ໃບຍິນຍອມສຳລັບການສັກຢາປ້ອງກັນໂຣກ HPV

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະຣຸນາຂຽນເປັນຕົວ**ພິມໂດຍ**ໃຊ້ປາກກາ**ສີດຳ** ຫຼື **ສີຟ້າ**.

## 1. ຣາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ ___ / ___ / 2 0 ___

ເພດ ☐ ຜູ້ຊາຍ ☐ ແມ່ຍິງ ☐ ບໍ່ກຳນົດ/ລະຫວ່າງສອງເພດ/ບໍ່ລະບຸ

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນຳເບີຂອງ ເມດີແຄຣ໌

ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດີແຄຣ໌

## 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ ☐ ແມ່ນ, ເປັນຊາວອາບໍຣິຈິໂນລ ☐ ແມ່ນ, ເປັນຊາວ ທໍເຣສເຕຣດ ໄອແລນເດີ ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

## 3. ຣາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບ ຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີ ຂອງ ການສັກຢາປ້ອງກັນໂຣກ HPV.

ຂ້ອຍຂໍຍິນຍອມໃຫ້ລູກຂອງຂ້ອຍ, ທີ່ມີຊື່ຂ້າງເທິງນີ້, ໃຫ້ໄດ້ຮັບວັກຊີນ HPV ເຂັມດຽວ ແລະ ຕົກລົງທີ່ຈະເປີດເຜີຍຂໍ້ມູນສຸຂະພາບຂອງລູກຂ້ອຍເພື່ອເຊື່ອມຕໍ່ໃນອະນາຄົດກັບໂຄງ ການ ກວດພະຍາດປາກມົດລູກແຫ່ງຊາດ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປຶ້ມຂໍ້ມູນ ສຳລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ ___ ຣະຫັດໄປສະນີ

ນຳເບີໂທຣະສັບມືຖື

ເລກໂທຣະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຣວມທັງຣະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ ✕

ວັນທີ ___ / ___ / 2 0 ___

## ບັນທຶກການສັກຢາປ້ອງກັນໂຣກ HPV

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ຂນາດຢາ 1

ລາຍເຊັນຂອງພະຍາບານ ×

ວັນທີ __ __ / __ __ / 2 0 __ __

**ຄວາມເຫັນຂອງພະຍາບານ**

ເຫັນຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

## **ພໍ່ແມ່/ຜູ້ປົກຄອງ** ບັນທຶກການສັກຢາປ້ອງກັນໂຣກ HPV

ບັນທຶກການສັກຢາປ້ອງກັນໂຣກ HPV

ຂນາດຢາ 1

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ×

ວັນທີ __ __ / __ __ / __ __ __ __

ຕົວຢ່າງເທົ່ານັ້ນ ກະລຸນາຂຽນຕື່ມ ຟອມຍິນຍອມນີ້ເປັນພາສາອັງກິດ

# ຢາສັກປ້ອງກັນໂຣກ ຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ (dTpa)

Diphtheria, tetanus and pertussis (dTpa) vaccine

ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກ ທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ ແນະນຳສຳລັບໂຄງການສັກຢາປ້ອງກັນໂຣກສຳລັບພວກວັຍໜຸ່ມ ໃນໂຣງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.

## ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈັ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກຄໍຕີບ, ໂຣກບາດທະຍັກ ແລະ ໂຣກ ໄອໄກ່ ຈົ່ງຂຽນຕື່ມຟອມຍິນຍອມ ແລ້ວເອົາຟອມຍິນຍອມທີ່ທ່ານເຊັນຮັບແລ້ວໃຫ້ລູກທ່ານນຳກັບໄປ ໃຫ້ ໂຣງຮຽນ.
- ຖ້າທ່ານ **ບໍ່** ຕ້ອງການໃຫ້ລູກທ່ານສັກຢາປ້ອງກັນໂຣກ ຄໍຕີບ, ໂຣກບາດທະຍັກ ແລະ ໂຣກ ໄອໄກ່ **ຢ່າ** ຂຽນຕື່ມຟອມຍິນຍອມນັ້ນ ຫຼື ສົ່ງຟອມກັບໄປໃຫ້ໂຣງຮຽນ.

## ຖ. ໂຣກ ຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ ແມ່ນຫຍັງ?

**ໂຣກຄໍຕີບ** ເປັນໂຣກຕິດຕໍ່ ແລະ ອາດເປັນອັນຕຣາຍແກ່ຊີວິດ ທີ່ເກີດມາຈາກ ການຕິດເຊື້ອແບັກທີເຣັຍທີ່ເຮັດໃຫ້ ຫາຍໃຈຍາກທີ່ສຸດ ຫົວໃຈລົ້ມເຫຼວ ແລະ ທຳລາຍເສັ້ນປະສາດ.

**ໂຣກບາດທະຍັກ** ເປັນໂຣກທີ່ຮ້າຍແຮງ ແລະ ເປັນໂຣກທີ່ເຖິງແກ່ຊີວິດຂອງຣະບົບ ປະສາດ. ຄົນທີ່ເປັນໂຣກນີ້ຈະມີຄວາມເຈັບປວດຢ່າງສາຫັດຈາກກ້າມເນື້ອທີ່ຫົດ ປັ້ນ ການຊັກ ແລະ ຄາງກະໄຕແຂງ. ອາການແຊກຊ້ອນປະກອບມີພະຍາດປອດ ບວມ, ກະດູກຫັກ (ຈາກການກະຕຸກຂອງກ້າມເນື້ອ), ລະບົບຫາຍໃຈລົ້ມເຫຼວ ແລະຫົວໃຈຢຸດເຕັ້ນ.

**ໂຣກໄອໄກ່** (ໄອຫອບ) ເປັນໂຣກຕິດຕໍ່ອັນຮ້າຍແຮງດ້ວຍເຊື້ອແບັກທີເຣັຍທີ່ກໍ່ ໃຫ້ເກີດການໄອເປັນລະຍະ. ບັນດາພວກ ວັຍຣຸ່ນ ແລະ ຜູ້ໃຫຍ່ອາດຈະມີອາການ ໄອທີ່ໜ້າລຳຄານດົນເຖິງສາມເດືອນ. ລະຍະທີ່ໄອແບບຮ້າຍແຮງສາມາດເຮັດໃຫ້ ຮາກ ກະດູກຂ້າງທ່ານ ເສັ້ນເລືອດຝອຍແຕກ ແລະ ໄສ້ເລື່ອນ. ອາການແຊກຊ້ອນ ໃນເດັກນ້ອຍປະກອບມີ ໂຣກປອດບວມ, ຊັກ ແລະ ສະໝອງເສື່ອມ (ພາວະ ສະໝອງທຳງານຜິດປົກກະຕິຍ້ອນຂາດອອັກຊີເຈັນ).

## ຖ. ໂຣກ ຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ ແພ່ຜາຍໄດ້ ຢ່າງໃດ?

**ໂຣກຄໍຕີບ** ເຊື້ອແບັກທີເຣັຍສາມາດຢູ່ໃນປາກ ດັງ ລຳຄໍ ຫຼື ຜິວໜັງຂອງຄົນທີ່ຕິດ ໂຣກນີ້. ຄົນທົ່ວໄປສາມາດຕິດໂຣກຄໍຕີບໄດ້ໂດຍການຫາຍໃຈເອົາເຊື້ອແບັກທີເຣັຍ ຈາກການໄອຫຼືຈາມຂອງຄົນທີ່ເປັນໂຣກນີ້ ເຂົ້າໄປ. ຄົນທົ່ວໄປຍັງສາມາດຕິດໂຣກ ຄໍຕີບນີ້ໄດ້ຈາກການຢູ່ໃກ້ຊິດກັບສິ່ງທີ່ຄົນເປັນໂຣກນີ້ໄດ້ປ່ອຍອອກມາຈາກປາກ ດັງ ລຳຄໍ ຫຼື ຜິວໜັງ.

**ໂຣກບາດທະຍັກ** ເກີດມາຈາກເຊື້ອແບັກທີເຣັຍທີ່ມາຈາກດິນ ແລະ ການຕິດໂຣກ ນີ້ອາດຈະເກີດຂຶ້ນຫຼັງຈາກທີ່ມີບາດແຜ ໃຫຍ່ ຫຼື ບາດແຜເລັກນ້ອຍ (ບາງຄັ້ງ ອາດຈະແມ່ນຮອຍແຫງທີ່ບໍ່ໄດ້ສັງເກດຢູ່ຜິວໜັງທີ່ຕິດເຊື້ອໂຣກຈາກດິນ ຝຸ່ນ ຫຼື ຈາກມູນສັດ).

**ໂຣກໄອໄກ່** ແພ່ຜາຍໄປຫາຄົນອື່ນໂດຍທາງ ຝອຍນ້ຳຈາກການໄອ ຫຼື ຈາມ. ຄົນທີ່ເປັນໂຣກໄອໄກ່ນີ້ ຖ້າບໍ່ຮັກສາ ຄົນທີ່ເປັນໂຣກໄອໄກ່ກໍສາມາດແພ່ຜາຍໄປ ຫາຄົນອື່ນໄດ້ຫຼັງຈາກເລີ່ມຕົ້ນໄອໄປຈົນເຖິງ 3 ອາທິດ.

## ຖ. ຢາວັກຊີນທຳງານຢ່າງໃດ?

ຢາວັກຊີນທຳງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດ ເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສຳຜັດ ກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດຕອບ ຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະ ຫຍາຍຕົວ ຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

## ຖ. ຢາວັກຊີນມີປະສິດທິຜົນເທົ່າໃດ?

ຢາວັກຊີນມີປະສິດທິຜົນທີ່ສຸດໃນການປ້ອງກັນໂຣກຄໍຕີບ ແລະ ບາດທະຍັກ ແລະ ປະມານ 80% ໃນການປ້ອງກັນໂຣກໄອໄກ່.

## ຖ. ເພື່ອຈະໄດ້ຮັບການປ້ອງກັນ ລູກຂ້ອຍຕ້ອງສັກຢາຈັກເຂັມ?

ກ່ອນເຂົ້າສູ່ວັຍຜູ້ໃຫຍ່ຕ້ອງສັກຢາປ້ອງກັນໂຣກ dTpa ເຂັມນຶ່ງເພື່ອໃຫ້ການ ປ້ອງກັນ ໂຣກຄໍຕີບ, ໂຣກບາດທະຍັກ ແລະ ໂຣກໄອໄກ່.

## ຖ. ແມ່ນໃຜທີ່ຄວນໄດ້ຮັບການສັກຢານີ້?

ຄົນວັຍໜຸ່ມທຸກຄົນຄວນໄດ້ຮັບການສັກຢາຊຸດກະຕຸ້ນຂອງ dTpa ເພື່ອ ໃຫ້ມີການປ້ອງກັນໂຣກຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່. ຢາຊຸດ ກະຕຸ້ນນີ້ມີຄວາມສຳຄັນໃນການ ຊ່ວຍຮັກສາພູມຕ້ານທານເມື່ອກ້າວເຂົ້າ ສູ່ວັຍຜູ້ໃຫຍ່ຫຼັງຈາກໄດ້ສັກຢາປ້ອງກັນປ້ອງກັນ ໂຣກຄໍຕີບ-ໂຣກບາດທະ ຍັກ ແລະໂຣກໄອໄກ່ ຄັ້ງກ່ອນໃນວັຍເດັກ. ບັນດານັກຮຽນທີ່ເຄີຍໄດ້ສັກຢາ ປ້ອງກັນໂຣກຄໍຕີບ-ບາດທະຍັກ (ADT) ມາແລ້ວກໍສາມາດໄດ້ຮັບການສັກຢາ dTpa ໄດ້ອີກເພື່ອປ້ອງກັນໂຣກໄອໄກ່.

## ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາປ້ອງກັນໂຣກ dTpa ນີ້ບໍ່ຄວນສັກໃຫ້ຜູ້ຄົນທີ່:

- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຕໍ່ສ່ວນປະສົມໃດນຶ່ງຂອງຢາສັກ (ຈັດເປັນບັນຊີ ລາຍການໄວ້ຢູ່ໜ້າຕໍ່ໄປ)

## ຖ. ຖ້າຂ້ອຍຈະລໍຖ້າຈົນລູກຂ້ອຍອາຍຸສູງຂຶ້ນຈະເປັນຢ່າງໃດ?

ຢາວັກຊີນ dTpa ສາມາດສະ ໜອງ ໃຫ້ຢູ່ໃນໂຮງຮຽນເທົ່ານັ້ນໂດຍໃຫ້ທ່ານສົ່ງແບບຟອມຍິນ ຍອມ ທີ່ເຊັນໃນຂະນະທີ່ລູກທ່ານຢູ່ໃນສູນຮຽນພາສາອັງກິດທີ່ເຂັ້ມຂຸ້ນ ຫຼືໃນ Year 7. ຖ້າທ່ານເລືອກທີ່ຈະລໍຖ້າ ຈົນກວ່າລູກທ່ານໃຫຍ່ກວ່ານີ້ ທ່ານຈະຕ້ອງເຮັດນັດໝາຍສັກຢາກັບນາຍໝໍຂອງທ່ານ.

## ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບຳບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນຳໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນຳໃຊ້ອີກດ້ວຍ.

## ຖ. ຢາສັກກັນໂຣກນີ້ບັນຈຸຫຍັງແດ່?

ຢາສັກນີ້ ບັນຈຸ aluminium hydroxide ແລະ phosphate, formaldehyde ໜ້ອຍນຶ່ງ, polysorbate 80 ແລະ glycine ໄດ້ ສຳຜັດກັບວັດສະດຸທີ່ອອກມາຈາກ bovine ໃນລະຫວ່າງການຜະລິດ.

## ຖ. ອາການຂ້າງຄຽງຂອງການສັກຢາກັນໂຣກ ມີຫຍັງແດ່?

ອາການຂ້າງຄຽງ ມີພຽງເບົາບາງ ແລະ ຕາມປົກກະຕິແລ້ວຈະເປັນຮອຍແດງ ມີອາການເຈັບ ແລະ ໃຄ່ຕາມບໍຣິເວນສັກຢາ ຫຼື ເປັນໄຂ້. ອາການຂ້າງຄຽງທີ່ຮ້າຍແຮງນັ້ນມີນ້ອຍທີ່ສຸດ. ຂໍ້ມູນເພີ່ມຕື່ມກ່ຽວກັບອາການຂ້າງຄຽງແມ່ນມີໄວ້ໃຫ້ທີ່ ກອງຂໍ້ມູນເລື່ອງຢາ ສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາ ຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

## ຖ. Anaphylaxis (ອາການແພ້ຢ່າງຣຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ. **ມັນຈະເກີດໄດ້*ຍາກທີ່ສຸດ* ຫຼັງຈາກການສັກຢາ**. ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

## ຖ. ຖ້າລູກຂ້ອຍເຄີຍມີປະຕິກິຣິຍາຮຸນແຮງຕໍ່ຢາສັກ Triple Antigen ຫຼື DTP ອັນເກົ່າຕັ້ງແຕ່ຍັງເປັນເດັກທາຣົກຢູ່ເດ?

ນອກຈາກວ່າລູກຂອງທ່ານຈະມີອາການແພ້ອັນຮຸນແຮງ ຫຼື ປະຕິກິຣິຍາແພ້ໃນທັນທີຕໍ່ຢາສັກອັນເກົ່າ ມັນກໍຈະເປັນການປອດໄພສຳລັບລູກຂອງທ່ານໃນການຮັບການສັກຢາປ້ອງກັນໂຣກ dTpa.

## ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕີໂຊນ ຫຼື ເປຣັດນິໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?

ຢາສັກ ປ້ອງກັນໂຣກ dTpa ສາມາດສັກໃຫ້ໃຜຜູ້ນຶ່ງທີ່ເປັນໂຣກຫືດໄດ້ໂດຍປອດໄພ ບໍ່ວ່າພວກເຂົາເຈົ້າຈະພວກກິນຢາຫຍັງຢູ່.

## ຖ. ແມ່ນໃຜສາມາດຍິນຍອມຕໍ່ການສັກຢາປ້ອງກັນໂຣກ ແລະ ຈະສາມາດຖອນການຍິນຍອມໄດ້ບໍ່?

ມີແຕ່ພໍ່ແມ່/ຜູ້ປົກຄອງເທົ່ານັ້ນທີ່ສາມາຍິນຍອມຕໍ່ການສັກ ຢາປ້ອງກັນໂຣກສຳລັບນັກຮຽນທີ່ມີອາຍຸຕ່ຳກວ່າ 18ປີ. ນັກຮຽນທີ່ມີອາຍຸ 18ປີແລະຫຼາຍກວ່າອາດຈະຍິນຍອມຕໍ່ການ ສັກຢາປ້ອງກັນໂຣກຂອງຕົນເອງ ແລະ ຄວນຂຽນຕື່ມພ້ອມທັງເຊັນຟອມຍິນຍອມບ່ອນທີ່ບົ່ງບອກວ່າ 'ພໍ່ແມ່/ຜູ້ປົກຄອງ'. ການຍິນຍອມສາມາດຖືກຖອນຄືນໄດ້ທຸກເວລາ ໂດຍການແຈ້ງໄປຫາທາງໂຮງຮຽນເປັນລາຍລັກອັກສອນ ເລື່ອງການຖອນການຍິນຍອມ ຫຼື ໂທຣະສັບຫາໂຮງຮຽນເພື່ອຖອນການຍິນຍອມນັ້ນ.

## ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼື ຄິດວ່າລາວອາດຈະຖືພາ ບໍ?

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງວ່າ ພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່. ຖ້າຄຳຕອບຂອງນັກຮຽນຕໍ່ຄຳຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນຳໃຫ້ປຶກສາຫາລື ບັນຫານີ້ກັບພໍ່ແມ່/ຜູ້ປົກຄອງຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບຣາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄຳແນະນຳ ການອຸ້ມຊູ ແລະ ການຊີ້ນຳ.

## ຖ. ຂ້ອຍຈະເຮັດແນວໃດຖ້າລູກຂ້ອຍພາດຈາກການສັກຢາທີ່ໂຮງຮຽນຍ້ອນເຈັບປ່ວຍ ຫຼື ຂາດໂຮງຮຽນໃນມື້ທີ່ພະຍາບານມາ?

ທ່ານຄວນຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ຈັດໃຫ້ລູກຂອງທ່ານໄດ້ສັກຢາ.

## ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສຳເນົາໃບລາຍງານປະຫວັດການສັກຢາ AIR ຂອງລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກຢາດ້ວຍຕົນເອງໄດ້ດັ່ງນີ້:

- ນຳໃຊ້ບັນຊີ Medicare online ຜ່ານ myGov my.gov.au/
- ນຳໃຊ້ແອັບ Medicare Express Plus www.humanservices.gov.au/individuals/subjects/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ 1800 653 809.

## ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນຄຳຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ). ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງ ອອສເຕຣເລັຍ (AIR) ເພື່ອວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

## ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນໂຮງຮຽນໄດ້ຈາກໃສ?

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່: www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານ ທີ່ເບີ 1300 066 055

September 2022 © NSW Ministry of Health. SHPN (HP NSW) 220728-1-15

Lao

# ໃບຍິນຍອມສຳລັບການສັກຢາປ້ອງກັນໂຣກຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ (dTpa)

NSW GOVERNMENT

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະລຸນາຂຽນເປັນ**ຕົວພິມ**ໂດຍໃຊ້ປາກກາ**ສີດຳ ຫຼື ສີຟ້າ.**

## 1. ລາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ   /   / 2 0

ເພດ: ຜູ້ຊາຍ ☐ ແມ່ຍິງ ☐ ບໍ່ກຳນົດ/ລະຫວ່າງສອງເພດ/ບໍ່ລະບຸ ☐

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນຳເບີຂອງ ເມດີແຄຣ໌

ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດີແຄຣ໌

## 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ ☐ ແມ່ນ, ເປັນຊາວອາບໍຣິຈິໂນລ ☐ ແມ່ນ, ເປັນຊາວ ທໍເຣສເຕຣດ ໄອແລນເດີ ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

## 3. ລາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບ ຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີຂອງການສັກຢາປ້ອງກັນໂຣກຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ (dTpa).

ຂ້ອຍໃຫ້ການຍິນຍອມມານະທີ່ນີ້ສຳລັບລູກຂ້ອຍທີ່ມີ ຊື່ຢູ່ຂ້າງເທິງນີ້ ເພື່ອໃຫ້ໄດ້ຮັບການສັກຢາປ້ອງກັນ ໂຣກຄໍຕີບ ໂຣກບາດທະຍັກ ແລະ ໂຣກໄອໄກ່ (dTpa) ຄັ້ງນີ້ງ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປື້ມຂໍ້ມູນ ສຳລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ

ລະຫັດໄປສະນີ

ນຳເບີໂທລະສັບມືຖື

ເລກໂທລະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຮວມທັງລະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ

✕

ວັນທີ   /   / 2 0

NSW GOVERNMENT

220728-2-15

## ບັນທຶກການສັກຢາປ້ອງກັນໂຣກ dTpa

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ __ __ / __ __ / 2 0 __ __

**ຄວາມເຫັນຂອງພະຍາບານ**

ເຫັນຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

# ພໍ່ແມ່/ຜູ້ປົກຄອງ

## ບັນທຶກການສັກຢາປ້ອງກັນໂຣກຄໍຕີບໂຣກບາດທະຍັກ ແລະ ໂຣກໄອໄກ່ (dTpa)

## ບັນທຶກການສັກຢາປ້ອງກັນໂຣກ dTpa

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ __ __ / __ __ / 2 0 __ __

### ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

### ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT

ຕົວຢ່າງເທົ່ານັ້ນ ກະລຸນາຂຽນໃນຟອມຍິນຍອມທີ່ເປັນພາສາອັງກິດ

# ຢາສັກປ້ອງກັນໂຣກ ວາຣິແຊລລາ (ໂຣກໝາກໃສ)

Varicella (chickenpox) vaccine

ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ແນະນໍາສໍາລັບໂຄງການສັກຢາປ້ອງກັນໂຣກສໍາລັບພວກວັຍໜຸ່ມໃນໂຮງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.

## ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກໝາກໃສ ຈົ່ງຂຽນຕື່ມ ຟອມຍິນຍອມແລ້ວເອົາຟອມຍິນຍອມທີ່ທ່ານເຊັນຮັບແລ້ວໃຫ້ລູກທ່ານນໍາກັບໄປໃຫ້ ໂຮງຮຽນ.
- ຖ້າທ່ານ ບໍ່ຕ້ອງການໃຫ້ລູກທ່ານສັກຢາປ້ອງກັນໂຣກໝາກໃສ ຢ່າ ຂຽນຕື່ມຟອມ ຍິນຍອມນັ້ນ ຫຼື ສົ່ງຟອມກັບໄປໃຫ້ໂຮງຮຽນ.

## ຖ. ໂຣກໝາກໃສ ແມ່ນຫຍັງ?

ໂຣກໝາກໃສເປັນໂຣກຕິດຕໍ່ງ່າຍທີ່ສຸດຊຶ່ງເກີດຈາກເຊື້ອໄວຣັສ ວາຣິແຊລລາ ຊົສເຕີຣ໌. ຕາມປົກກະຕິ ແລ້ວ ໂຣກນີ້ຈະເປັນໂຣກທີ່ບໍ່ຮ້າຍແຮງປານໃດ ແລະ ເປັນລະຍະສັ້ນໃນເດັກທີ່ມີສຸຂພາບດີ ແລະ ມີອາ ການເຊັ່ນ ເປັນໄຂ້ຕົວຮ້ອນເລັກນ້ອຍ ຂີ້ມູກໄຫຼ ຮູ້ສຶກບໍ່ສະບາຍຕົວທົ່ວໄປ ແລະ ມີຕຸ່ມຜື່ນຄັນ ແລ້ວເກີດເປັນຕຸ່ມໃສ. ເຖິງຢ່າງໃດກໍດີ ໂຣກນີ້ຈະຮ້າຍແຮງຂຶ້ນສໍາລັບຜູ້ໃຫຍ່ ແລະ ສາມາດກໍ່ໃຫ້ເກີດເປັນໂຣກຮ້າຍ ແຮງທີ່ເຖິງແກ່ຊີວິດໄດ້ ສໍາລັບຜູ້ທີ່ມີພູມຕ້ານທານຕໍ່າ. ນຶ່ງໃນ 4,000 ກໍຣະນີຈະປະສົບກັບອາການສູນເສັຍການເຄື່ອນໄຫວຂອງກ້າມເນື້ອຢ່າງທັນທີ (acute cerebellar ataxia) ໃນຂະນະທີ່ ນຶ່ງໃນ 100,000 ຄົນ ຈະເປັນ ໂຣກ ສະໝອງອັກເສບ. ການເປັນໂຣກນີ້ໃນຂະນະທີ່ຖືພາອາດເຮັດໃຫ້ ເດັກທີ່ເກີດມາມີພາວະຜິດ ປົກກະຕິໄດ້ ຮວມເຖິງເປັນແປ້ວຕາມຜິວໜັງ ແລະ ແຂນຂາບໍ່ສົມປະກອບ.

## ຖ. ໂຣກໝາກໃສແພ່ຜາຍໄດ້ຢ່າງໃດ?

ໃນຕອນຕົ້ນໆຂອງການປ່ວຍ ເຊື້ອໄວຣັສຈະແພ່ຜາຍໂດຍການໄອ. ໃນຕອນຫຼັງຂອງການປ່ວຍ ເຊື້ອໄວຣັສ ແພ່ຜາຍໂດຍການສໍາຜັດໂດຍກົງກັບນໍ້າທີ່ອອກຈາກຕຸ່ມແຕກ. ການຕິດເຊື້ອໂຣກນີ້ເປັນການຕິດແປດທີ່ໄວທີ່ສຸດສໍາລັບຜູ້ທີ່ບໍ່ເຄີຍເປັນໂຣກໝາກໃສມາກ່ອນ ຫຼື ຜູ້ທີ່ບໍ່ທັນເຄີຍສັກຢາປ້ອງກັນ. ຜູ້ທີ່ເປັນໂຣກນີ້ຈະເລີ້ມ ຕິດໂຣກນັບຈາກນຶ່ງ ຫຼື ສອງວັນກ່ອນທີ່ຕຸ່ມຈະປະກົດໃຫ້ເຫັນ (ນັ້ນຄືໃນລະຍະທີ່ຂີ້ມູກໄຫຼ) ແລະ ຫຼັງຈາກນັ້ນເຖິງຫ້າວັນ (ເມື່ອເວລາທີ່ຕຸ່ມໃສແຕກແລະກາຍເປັນຕົກເກັດ).

## ຖ. ຢາວັກຊີນທໍາງານຢ່າງໃດ?

ຢາວັກຊີນທໍາງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສໍາຜັດກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດຕອບຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະຫຍາຍຕົວຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

## ຖ. ຢາວັກຊີນມີປະສິດທິຜົນເທົ່າໃດ?

ຢາສັກກັນໂຣກໝາກໃສເຂັມດຽວມີປະສິດທິພາບ 80-85%ໃນການປ້ອງກັນໂຣກໝາກໃສ ແລະ ມີປະສິດທິ ພາບສູງໃນການປ້ອງກັນໂຣກທີ່ຮ້າຍແຮງອື່ນໆ.

## ຖ. ແມ່ນໃຜທີ່ຄວນໄດ້ຮັບການສັກຢານີ້?

ບັນດານັກຮຽນທີ່ມີອາຍຸເຖິງ 14 ປີຕ້ອງສັກຢາປ້ອງກັນໂຣກ ໝາກໃສນຶ່ງເຂັມ, **ນອກຈາກວ່າພວກເຂົາໄດ້ເຄີຍສັກຢາ ມາແລ້ວ** (ຕາມທັມມະດາແມ່ນຕອນອາຍຸ 18 ເດືອນ) **ຫຼື ເຄີຍເປັນໂຣກໝາກໃສມາແລ້ວ.** ບັນດານັກຮຽນທີ່ມີອາຍຸ 14 ປີ ຫຼື ຫຼາຍກວ່າຕ້ອງສັກຢາປ້ອງກັນໂຣກໝາກໃສ ສອງເຂັມໃນລະຍະຫ່າງກັນ 1-2 ເດືອນເປັນຢ່າງຕໍ່າໂດຍ ນາຍໝໍຂອງພວກເຂົາ.

## ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາສັກປ້ອງກັນໂຣກໝາກໃສນີ້ ບໍ່ຄວນ ສັກໃຫ້ຜູ້ທີ່:

- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຕໍ່ສ່ວນປະສົມໃດນຶ່ງຂອງຢາສັກ (ຈັດເປັນບັນຊີລາຍການໄວ້ຢູ່ໜ້າຕໍ່ໄປ)
- ຖືພາ (ຄວນຫຼີກເວັ້ນການຖືພາ 28 ວັນຫຼັງຈາກການສັກຢາ)
- ເຄີຍໄດ້ຮັບການປ່ຽນເລືອດ/ສັກຢາເພື່ອສ້າງພູມຕ້ານທານ ພາຍໃນລະຍະ 12 ເດືອນທີ່ຜ່ານມາ
- ເຄີຍໄດ້ຮັບການສັກຢາດ້ວຍເຊື້ອທີ່ມີຊີວິດພາຍໃນ 4 ອາທິດທີ່ຜ່ານມາ (ເຊັ່ນ MMR (ໂຣກຫັດ ໂຣກໝາກເບີດ ແລະ ໂຣກ ໝາກໃສ) BCG (ວັນນະໂຣກ) ແລະ ໂຣກ ໝາກເຫຼືອງ).
- ຂາດພູມຕ້ານທານ ເຊັ່ນ:
    i. ບຸກຄົນທີ່ມີໂຣກ ເຮັສໄອວີ/ເອດສ໌
    ii. ບຸກຄົນທີ່ພວມຮັບການຮັກສາດ້ວຍຣະບົບທີ່ເຮັດໃຫ້ພູມຕ້ານທານຕໍ່າ, ການບໍາບັດແບບໃຊ້ເຄມີ, ການບໍາບັດດ້ວຍແສງຣັງສີ ຫຼື ບຸກຄົນທີ່ກິນຢາສ້າງຄວາມສົມດຸນໃຫ້ຮ່າງກາຍ (corticosteroids)
    iii. ບຸກຄົນທີ່ປ່ວຍຢ່າງຮ້າຍແຮງເນື່ອງຈາກຣະບົບພູມຕ້ານທານພະຍາດຕໍ່າ ຮວມເຖິງພາວະຄວາມບົກພ່ອງຂອງການຈະເຣີນເຕີບໂຕຂອງເນື້ອເຍື່ອນໍ້າເຫຼືອງ, ມະເຮັງເມັດເລືອດຂາວ ຫຼື ພາວະ ຮ້າຍແຮງຢ່າງອື່ນທີ່ອາດເຖິງຂັ້ນເສັຍຊີວິດໄດ້.

## ຖ. Anaphylaxis (ອາການແພ້ຢ່າງຮຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ. **ມັນຈະເກີດໄດ້*ຍາກທີ່ສຸດ* ຫຼັງຈາກການສັກຢາ.** ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

## ຖ. ຂ້ອຍຄວນເຮັດຢ່າງໃດ ຖ້າຂ້ອຍບໍ່ມີບັນທຶກ ຫຼື ຂ້ອຍບໍ່ຈື່ວ່າລູກຂອງຂ້ອຍເຄີຍເປັນໂຣກໝາກໃສ ຫຼືເຄີຍໄດ້ສັກຢາປ້ອງກັນໂຣກໝາກໃສ ຫຼືຍັງ?

ບັນດາເດັກນ້ອຍ ແລະ ຜູ້ໃຫຍ່ສາມາດໄດ້ຮັບການສັກຢາກັນໂຣກໝາກໃສອີກຄັ້ງນຶ່ງໄດ້ຢ່າງປອດໄພຖ້າຫາກວ່າບໍ່ໝັ້ນໃຈວ່າເຄີຍເປັນໂຣກໝາກໃສມາກ່ອນຫຼືບໍ່ ຫຼື ຖ້າຫາກບໍ່ມີຫຼັກຖານວ່າເຄີຍສັກຢາປ້ອງກັນໂຣກໝາກໃສມາກ່ອນ.

## ຖ. ຢາສັກກັນໂຣກໝາກໃສ ບັນຈຸທາດເສີມຫຍັງແດ່?

ຢາສັກນີ້ ບັນຈຸ ຊູໂກຣສ ຣາຍໂດຣລີເຊດ ປຣີຊີນ ເຈລາຕິນ ຢູເຣອາ ໂມໂນໂຊດຽມ ກລູຕາເມດ ສ່ວນເສດ ເຫຼືອຂອງອົງປະກອບຂອງເຊລ MRC-5, ຮ່ອງຮອຍຂອງເຊຣໂມ ນີໂອມີຊີນ ແລະ ໂບວີນ). ທາດເສີມໄດ້ຖືກນຳມາປະສົມ ເປັນຈຳນວນເລັກນ້ອຍ ເພື່ອຊ່ວຍໃຫ້ຢາກັນໂຣກທຳງານ ຫຼື ທຳໜ້າທີ່ປ້ອງກັນບໍ່ໃຫ້ຢາເສັຍ. ຢາວັກຊີນນີ້ໄດ້ ສຳ ຜັດກັບວັດສະດຸທີ່ອອກມາຈາກ bovine (ສັດໃຫຍ່ເຊັ່ນງົວ) ໃນລະຫວ່າງການຜະລິດ.

## ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບຳບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນຳໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນຳໃຊ້ອີກດ້ວຍ.

## ຖ. ອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກໝາກໃສມີຫຍັງແດ່?

ອາການຂ້າງຄຽງ ມີພຽງເບົາບາງ ແລະ ຕາມປົກກະຕິແລ້ວຈະເປັນຮອຍແດງ ມີອາການເຈັບ ແລະ ໃຄ່ຕາມບໍຣິເວນສັກຢາ ຫຼື ເປັນໄຂ້. ອາການຂ້າງຄຽງທີ່ຮ້າຍແຮງນັ້ນມີນ້ອຍທີ່ສຸດ. ຂໍ້ມູນເພີ່ມຕື່ມກ່ຽວກັບອາການຂ້າງຄຽງແມ່ນມີໄວ້ໃຫ້ທີ່ ກອງຂໍ້ມູນເລື້ອງຢາ ສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

## ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼືຄິດວ່າລາວອາດຈະຖືພາ ບໍ?

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງວ່າພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່. ຖ້າຄຳຕອບຂອງນັກຮຽນຕໍ່ຄຳຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນຳໃຫ້ປຶກສາຫາລືບັນຫານີ້ກັບພໍ່ແມ່/ຜູ້ປົກຄອງຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບຣາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄຳແນະນຳ ການອູ້ມຊູ ແລະ ການຊີ້ນຳ.

**ບັນດານັກຮຽນຍິງທີ່ໄດ້ຮັບການສັກຢາປ້ອງກັນໂຣກໝາກໃສ ບໍ່ຄວນຖືພາພາຍໃນ 28 ມື້ຫຼັງຈາກການສັກຢານັ້ນ.**

## ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕິໂຊນ ຫຼື ເປຣັດນີໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?

ຢາສັກປ້ອງກັນໂຣກໝາກໃສສາມາດສັກໃຫ້ຜູ້ທີ່ມີໂຣກຫືດ ໄດ້ຢ່າງປອດໄພບໍ່ວ່າພວກເຂົາຈະພວມກິນຢາຫຍັງຢູ່ກໍ ຕາມ.

## ຖ. ຂ້ອຍຈະຖອນຄຳຍິນຍອມໄດ້ບໍ່?

ຄຳຍິນຍອມສາມາດຖອນໄດ້ທຸກເວລາດ້ວຍການແຈ້ງການຖອນຄຳຍິນຍອມໄປຫາທາງໂຮງຮຽນຢ່າງເປັນລາຍລັກອັກສອນ ຫຼື ໂທຣະສັບໄປຫາໂຮງຮຽນເພື່ອຖອນຄຳຍິນຍອມນີ້.

## ຖ. ຂ້ອຍຈະເຮັດແນວໃດຖ້າລູກຂ້ອຍພາດຈາກການສັກຢາທີ່ໂຮງຮຽນຍ້ອນເຈັບປ່ວຍ ຫຼື ຂາດໂຮງຮຽນໃນມື້ທີ່ພະຍາບານມາ?

ທ່ານຄວນຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ຈັດໃຫ້ລູກຂອງທ່ານໄດ້ສັກຢາ.

## ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສຳເນົາໃບລາຍງານປະຫວັດການສັກຢາ AIR ຂອງລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກຢາດ້ວຍຕົນເອງໄດ້ດັ່ງນີ້:

- ນຳໃຊ້ບັນຊີ Medicare online ຜ່ານ myGov my.gov.au/
- ນຳໃຊ້ແອັບ Medicare Express Plus www.humanservices.gov.au/individuals/subjects/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ 1800 653 809.

## ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນຄຳຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ). ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງອອສເຕຣເລັຍ (AIR) ເພື່ອວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

## ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນໂຮງຮຽນໄດ້ຈາກໃສ?

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່: www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານ ທີ່ເບີ 1300 066 055

# ໃບຍິນຍອມສຳລັບການສັກຢາປ້ອງກັນໂຣກ Varicella (ໂຣກໝາກສຸກ)

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະລຸນາຂຽນເປັນ**ຕົວພິມ**ໂດຍໃຊ້ປາກກາສີດຳ ຫຼື ສີຟ້າ.

## 1. ຣາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ    /    / 2 0

ເພດ   ☐ ຜູ້ຊາຍ   ☐ ແມ່ຍິງ   ☐ ບໍ່ກຳນົດ/ລະຫວ່າງສອງເພດ/ບໍ່ລະບຸ

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນຳເບີຂອງ ເມດິແຄຣ໌

☐ ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດິແຄຣ໌

## 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ   ☐ ແມ່ນ, ເປັນຊາວອາບໍຣິຈິໂນລ   ☐ ແມ່ນ, ເປັນຊາວ ທໍເຣສເຕຣດ ໄອແລນເດີ   ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

## 3. ຣາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບ ຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີ ຂອງ ການສັກຢາປ້ອງກັນໂຣກ Varicella.

ຂ້ອຍໃຫ້ການຍິນຍອມນານະທີ່ນີ້ສຳລັບລູກຂ້ອຍທີ່ມີ ຊື່ຢູ່ຂ້າງເທິງນີ້ ເພື່ອໃຫ້ໄດ້ຮັບການສັກຢາປ້ອງກັນໂຣກ Varicella ຄັ້ງນຶ່ງ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປຶ້ມຂໍ້ມູນ ສຳລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ    ຣະຫັດໄປສະນີ

ນຳເບີໂທຣະສັບມືຖື    ເລກໂທຣະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຮວມທັງຣະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ   ✕

ວັນທີ    /    / 2 0

ຕົວຢ່າງເທົ່ານັ້ນ
ກະລຸນາໃຊ້
ຟອມຍິນຍອມທີ່ເປັນ
ພາສາອັງກິດ

NSW GOVERNMENT

220733-2-15

## ບັນທຶກການສັກຢາປ້ອງກັນໂຣກ Varicella (ໂຣກໝາກສຸກ)

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ×

ວັນທີ __ __ / __ __ / 2 0 __ __

**ຄວາມເຫັນຂອງພະຍາບານ**

ເຫັນຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

## **ພໍ່ແມ່/ຜູ້ປົກຄອງ** ບັນທຶກການສັກຢາປ້ອງກັນໂຣກ Varicella (ໂຣກໝາກສຸກ)

### ບັນທຶກການສັກຢາປ້ອງກັນໂຣກ Varicella (ໂຣກໝາກສຸກ)

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ×

ວັນທີ __ __ / __ __ / 2 0 __ __

### ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

### ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT

ຕົວຢ່າງໃຊ້ບໍ່ໄດ້ ກະລຸນາຂໍຮັບແບບຟອມຍິນຍອມທີ່ເປັນພາສາອັງກິດ

# ຢາສັກປ້ອງກັນໂຣກ ໂຣກຕັບອັກເສບ ຊນິດ ບີ

Hepatitis B vaccine

ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກ ທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ ແນະນໍາສໍາລັບໂຄງການສັກຢາປ້ອງກັນໂຣກສໍາລັບພວກວັຍໜຸ່ມ ໃນໂຮງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.

## ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈັ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກຕັບອັກເສບ ຊນິດ ບີ ຈົ່ງຂຽນຕື່ມຟອມຍິນຍອມແລ້ວເອົາຟອມຍິນຍອມທີ່ ທ່ານເຊັນຮັບແລ້ວໃຫ້ລູກທ່ານນໍາກັບໄປໃຫ້ ໂຮງຮຽນ.
- ຖ້າທ່ານ **ບໍ່** ຕ້ອງການໃຫ້ລູກທ່ານສັກຢາປ້ອງກັນໂຣກ ຕັບ ອັກເສບ ຊນິດ ບີ **ຢ່າ** ຂຽນຕື່ມຟອມຍິນຍອມນັ້ນ ຫຼື ສົ່ງຟອມ ກັບໄປໃຫ້ໂຮງຮຽນ.

## ຖ. ໂຣກຕັບອັກເສບ ຊນິດ ບີ ແມ່ນຫຍັງ?

ໂຣກຕັບອັກເສບ ຊນິດ ບີ ເປັນໂຣກທີ່ມີໄວຣັສທີ່ກໍ່ໃຫ້ເກີດມີອາການຕ່າງໆເຊັ່ນ ເປັນໄຂ້ ໂຣກໝາກເຫຼືອງ ແລະ ຮູ້ສຶກອ່ອນເພັຍທົ່ວໄປ ແລະ ສາມາດນໍາໄປສູ່ ໂຣກຕັບແຂງ ຫຼື ມະເຮັງໃນຕັບ. ບາງຄົນອາດມີໂຣກຕັບອັກເສບ ຊນິດ ບີ ແລະ ບໍ່ຮູ້ວ່າເຂົາເຈົ້າຕິດເຊື້ອໂຣກນີ້. ຄົນພວກນີ້ສາມາດແຜ່ໂຣກນີ້ໄປຫາຄົນອື່ນໂດຍ ບໍ່ຮູ້ຕົວ.

## ຖ. ໂຣກຕັບອັກເສບ ຊນິດ ບີ ແຜ່ພາຍໄດ້ຢ່າງໃດ?

- ຈາກແມ່ທີ່ມີເຊື້ອໂຣກຫາລູກໃນເວລາຄອດ ແລະ ລ້ຽງລູກດ້ວຍນົມຕົນເອງ
- ເດັກ-ຫາ-ເດັກ ໂດຍທັມມະດາແລ້ວແມ່ນໂດຍຜ່ານການສໍາຜັດລະຫວ່າງການ ບາດເຈັບ ຫຼື ບາດແຜທີ່ບໍ່ຖືກປົກປິດ
- ເພດສໍາພັນທີ່ບໍ່ປອດໄພ
- ການທີ່ມີບາດເຈັບໂດຍຖືກເຂັມແທງ
- ສັກລາຍ ຫຼື ບ່ອງຕົນຕົວດ້ວຍອຸປະກອນທີ່ບໍ່ໄດ້ຜ່ານການຂ້າເຊື້ອໂຣກ
- ໃຊ້ອຸປະກອນສັກຢາຮ່ວມກັນ

## ຖ. ຢາວັກຊີນທໍາງານຢ່າງໃດ?

ຢາວັກຊີນທໍາງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດ ເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສໍາຜັດ ກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດ ຕອບຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະ ຫຍາຍຕົວຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

## ຖ. ຢາວັກຊີນມີປະສິດທິຜົນເທົ່າໃດ?

ຢາສັກກັນໂຣກ ຕັບອັກເສບ ຊນິດ ບີ ມີປະສິດທິພາບສູງຫຼາຍໃນການໃຫ້ການ ປ້ອງກັນການຕິດໂຣກ ຕັບ ອັກເສບ ຊນິດ ບີ.

## ຖ. ມີການສັກຢາຈັກຄັ້ງໃນຊຸດນຶ່ງ?

ໃນ Intensive English Centres ຢາສັກປ້ອງກັນໂຣກຕັບອັກເສບ ຊນິດ ບີ ຈະສັກໃຫ້ຊຸດນຶ່ງສອງເຂັມ ແລ້ວຈະ ສັກຊຸດທີສອງອີກພາຍໃນລະຍະເວລາ 4 ຫາ 6 ເດືອນຫຼັງຈາກການສັກຊຸດທີນຶ່ງ.

## ຖ. ລູກຂ້ອຍຈະຖືກປ້ອງກັນຈາກໂຣກຕັບອັກເສບ ຊນິດ ບີ ຫຼືບໍ່ຖ້າ ລາວໄດ້ສັກຢາກັນໂຣກຕັບອັກເສບ ຊນິດ ບີ ພຽງຄັ້ງດຽວ?

ບໍ່. ພວກວັຍຣຸ່ນ(ອາຍຸ 11 – 15ປີ) ຕ້ອງສັກຢາສໍາລັບຜູ້ໃຫຍ່ສອງຄັ້ງເພື່ອຈະຖືກ ປ້ອງກັນຈາກໂຣກຕັບອັກເສບ ຊນິດ ບີ ໄດ້.

## ຖ. ແມ່ນໃຜທີ່ຄວນໄດ້ຮັບການສັກຢານີ້?

ນັກຮຽນໝົດທຸກຄົນທີ່**ມີອາຍຸ 11-15ປີ** ຄວນໄດ້ຮັບການສັກຢາປ້ອງກັນໂຣກ ຕັບອັກເສບ ຊນິດ ບີ **ສໍາລັບຜູ້ໃຫຍ່ ສອງເຂັມ** ນອກເສັຽຈາກວ່າພວກເຂົາເຈົ້າ ເຄີຍໄດ້ຮັບການສັກຢານີ້ມາແລ້ວຊຸດນຶ່ງໃນເວລາເປັນທາຣົກ/ເດັກ.

ນັກຮຽນອາຍຸ **16 ປີ ຫຼື ຫຼາຍກວ່າ**ຄວນໄດ້ຮັບຢາ**ວັກຊີນເດັກ 3 ຄັ້ງ**. ຢາ 2 ຄັ້ງ ທໍາ ອິດອາດຈະຖືກສັກໃຫ້ໃນໂຮງຮຽນແລະຫຼັງຈາກນັ້ນຈະມີຈົດໝາຍສະບັບນຶ່ງ ເພື່ອໃຫ້ນໍາໄປໃຫ້ GP ຂອງພວກເຂົາເພື່ອຈະໄດ້ສັກຢາໃຫ້ຄົບຊຸດ.

## ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາປ້ອງກັນໂຣກ ຕັບອັກເສບ ຊນິດ ບີ ນີ້ ບໍ່ຄວນ ສັກໃຫ້ຜູ້ທີ່:

- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາທີ່ມີສ່ວນປະສົມໃດນຶ່ງຂອງ ຢາສັກ (ຈັດເປັນບັນຊີລາຍການໄວ້ຢູ່ໜ້າຕໍ່ໄປ)
- ບຸກຄົນທີ່ຖືພາ

## ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານ ການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບໍາບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນໍາໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນໍາໃຊ້ອີກດ້ວຍ.

## ຖ. ຢາສັກກັນໂຣກ ຕັບອັກເສບ ຊນິດ ບີ ບັນຈຸຫຍັງແດ່?

ຢາສັກກັນໂຣກຕັບອັກເສບ ຊນິດ ບີ ບັນຈຸ aluminium hydroxide ເພື່ອຊ່ວຍໃຫ້ຢາທໍາງານ ແລະ ອາດຈະບັນຈຸທາດໂປຣຕີນຂອງຢີດສ໌ ແລະໄດ້ ສໍາ ຜັດກັບວັດສະດຸທີ່ອອກມາຈາກ bovine ໃນລະຫວ່າງການຜະລິດ.

## ຖ. ອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກ ຕັບອັກເສບ ຊນິດ ບີ ມີຫຍັງແດ່?

ອາການຂ້າງຄຽງ ມີພຽງເບົາບາງ ແລະ ຕາມປົກກະຕິແລ້ວຈະເປັນຮອຍແດງ ມີອາການເຈັບ ແລະ ໃຄ່ຕາມບໍລິເວນສັກຢາ ຫຼື ເປັນໄຂ້. ອາການຂ້າງຄຽງທີ່ຮ້າຍແຮງນັ້ນມີນ້ອຍທີ່ສຸດ. ຂໍ້ມູນເພີ່ມຕື່ມກ່ຽວກັບອາການຂ້າງຄຽງແມ່ນມີໄວ້ໃຫ້ທີ່ ກອງຂໍ້ມູນເລື້ອງຢາ ສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

## ຖ. Anaphylaxis (ອາການແພ້ຢ່າງຮຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ. **ມັນຈະເກີດໄດ້*ຍາກທີ່ສຸດ* ຫຼັງຈາກການສັກຢາ**. ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

## ຖ. ຂ້ອຍຄວນເຮັດຢ່າງໃດ ຖ້າຂ້ອຍບໍ່ມີບັນທຶກ ຫຼື ຂ້ອຍບໍ່ຈື່ວ່າລູກຂອງຂ້ອຍໄດ້ສັກຢາປ້ອງກັນໂຣກ ຕັບອັກ ເສບ ຊນິດ ບີ ຫຼືຍັງ?

ມັນຈະເປັນການປອດໄພທີ່ລູກຂອງທ່ານສັກຢາກັນໂຣກຕັບອັກເສບ ຊນິດ ບີ ອີກຊຸດນຶ່ງ.

## ຖ. ລູກຂ້ອຍໄດ້ຮັບການສັກຢາ Hib ແລ້ວ. ອັນນີ້ຈະປ້ອງກັນລູກຂອງຂ້ອຍຈາກໂຣກຕັບອັກເສບ ຊນິດ ບີ ບໍ່?

ບໍ່. ຢາສັກ Hib ປ້ອງກັນຈາກໂຣກໄຂ້ຫວັດ ເຮໂມຟີລັສ ຊນິດ ບີ ເທົ່ານັ້ນ ແລະ ສັກໃຫ້ ເດັກທາຣົກຕອນອາຍຸ 6ອາທິດ, 4 ເດືອນ, 6ເດືອນ ແລະ 18ເດືອນ. ມັນຈະບໍ່ປ້ອງກັນລູກຂອງທ່ານຈາກ ໂຣກ ຕັບອັກເສບ ຊນິດ ບີ.

## ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼື ຄິດວ່າລາວອາດຈະຖືພາ ບໍ?

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງວ່າພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່. ຖ້າຄຳຕອບຂອງນັກຮຽນຕໍ່ຄຳຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນຳໃຫ້ປຶກສາຫາລືບັນຫານີ້ກັບພໍ່ແມ່/ຜູ້ປົກຄອງຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບລາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄຳແນະນຳ ການອູ້ມຊູ ແລະ ການຊີ້ນຳ.

## ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕີໂຊນ ຫຼື ເປຣັດນິໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?

ຢາສັກ ປ້ອງກັນໂຣກ ຕັບອັກເສບ ປະເພດ ບີ ສາມາດສັກໃຫ້ໃຜຜູ້ນຶ່ງທີ່ເປັນໂຣກຫືດໄດ້ໂດຍປອດໃພ ບໍ່ວ່າພວກເຂົາເຈົ້າຈະພວກກິນຢາຫຍັງຢູ່.

## ຖ. ແມ່ນໃຜສາມາດຍິນຍອມຕໍ່ການສັກຢາປ້ອງກັນໂຣກ ແລະ ຈະສາມາດຖອນການຍິນຍອມໄດ້ບໍ່?

ມີແຕ່ພໍ່ແມ່/ຜູ້ປົກຄອງເທົ່ານັ້ນທີ່ສາມາຍິນຍອມຕໍ່ການສັກ ຢາປ້ອງກັນໂຣກສຳລັບນັກຮຽນທີ່ມີອາຍຸຕ່ຳກວ່າ 18ປີ. ນັກຮຽນທີ່ມີອາຍຸ 18ປີແລະຫຼາຍກວ່າອາດຈະຍິນຍອມຕໍ່ການ ສັກຢາປ້ອງກັນໂຣກຂອງຕົນເອງ ແລະ ຄວນຂຽນຕື່ມ ພ້ອມທັງເຊັນຟອມຍິນຍອມບ່ອນທີ່ບົ່ງບອກວ່າ 'ພໍ່ແມ່/ຜູ້ປົກຄອງ'. ການຍິນຍອມສາມາດຖືກຖອນຄືນໄດ້ທຸກເວລາ ໂດຍການແຈ້ງໄປຫາທາງໂຮງຮຽນເປັນລາຍລັກອັກສອນ ເລື້ອງການຖອນການຍິນຍອມ ຫຼື ໂທຣະສັບຫາໂຮງຮຽນເພື່ອຖອນການຍິນຍອມນັ້ນ.

## ຖ. ຂ້ອຍຈະເຮັດແນວໃດຖ້າລູກຂ້ອຍພາດຈາກການສັກຢາທີ່ໂຮງຮຽນຍ້ອນເຈັບປ່ວຍ ຫຼື ຂາດໂຮງຮຽນໃນມື້ທີ່ພະຍາບານມາ?

ທ່ານຄວນຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ຈັດໃຫ້ລູກຂອງທ່ານໄດ້ສັກຢາ.

## ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສຳເນົາໃບລາຍງານປະຫວັດການສັກຢາ AIR ຂອງລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກຢາດ້ວຍຕົນເອງໄດ້ດັ່ງນີ້:

- ນຳໃຊ້ບັນຊີ Medicare online ຜ່ານ myGov my.gov.au/
- ນຳໃຊ້ແອັບ Medicare Express Plus www.humanservices.gov.au/individuals/subjects/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ 1800 653 809.

## ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນຄຳຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ). ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງອອສເຕຣເລັຍ (AIR) ເພື່ອວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

## ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນໂຮງຮຽນໄດ້ຈາກໃສ?

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່: www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານທີ່ເບີ 1300 066 055

## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນ້ຳເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນ້ຳຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນ້ຳເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນ້ຳຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


220729-2-15

Lao

# ໃບຍິນຍອມສຳລັບການສັກຢາປ້ອງກັນໂຣກ ຕັບອັກເສບ ຊະນິດ B

NSW GOVERNMENT

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະຣຸນາຂຽນເປັນ**ຕົວພິມ**ໂດຍໃຊ້ປາກກາສີດຳ ຫຼື ສີຟ້າ.

### 1. ຣາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ   __ __ / __ __ / 2 0 __ __

ເພດ   ☐ ຜູ້ຊາຍ   ☐ ແມ່ຍິງ   ☐ ບໍ່ກຳນົດ/ລະຫວ່າງສອງເພດ/ບໍ່ລະບຸ

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນຳເບີຂອງ ເມດິແຄຣ

☐ ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດິແຄຣ

### 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ   ☐ ແມ່ນ, ເປັນຊາວອາບໍຣິຈິໂນລ   ☐ ແມ່ນ, ເປັນຊາວ ທໍເຣສເຕຣດ ໄອແລນເດີ   ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

### 3. ຣາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີ ຂອງການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B.

ຂ້ອຍໃຫ້ການຍິນຍອມມານະທີ່ນີ້ສຳລັບລູກຂ້ອຍທີ່ມີຊື່ຢູ່ຂ້າງເທິງນີ້ ເພື່ອໃຫ້ໄດ້ຮັບການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B ຊຸດນຶ່ງທີ່ມີ 2 ຂນາດ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປຶ້ມຂໍ້ມູນ ສຳລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ   ຣະຫັດໄປສະນີ

ນຳເບີໂທຣະສັບມືຖື   ເລກໂທຣະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຮວມທັງຣະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ   ✗

ວັນທີ   __ __ / __ __ / 2 0 __ __

## ບັນທຶກການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ຂະໜາດຢາ 1**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ___ ___ : ___ ___

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ ___ ___ / ___ ___ / 2 0 ___ ___

**ຂະໜາດຢາ 2**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ___ ___ : ___ ___

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ ___ ___ / ___ ___ / 2 0 ___ ___

**ຄວາມເຫັນຂອງພະຍາບານ**

ເຫັນຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

## **ພໍ່ແມ່/ຜູ້ປົກຄອງ** ບັນທຶກການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B

### ບັນທຶກການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B — ຂະໜາດຢາ 1

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ___ ___ : ___ ___

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ ___ ___ / ___ ___ / 2 0 ___ ___

### ບັນທຶກການສັກຢາປ້ອງກັນໂຣກຕັບອັກເສບ ຊະນິດ B — ຂະໜາດຢາ 2

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

ສຳລັບຫ້ອງການໃຊ້ເທົ່ານັ້ນ

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ___ ___ : ___ ___

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ ✕

ວັນທີ ___ ___ / ___ ___ / 2 0 ___ ___

# ຢາສັກປ້ອງກັນໂຣກ ຫັດ ໂຣກໝາກເບີດ ແລະ ໂຣກ ຫັດເຢັຍຣະມັນ (MMR)

Measles, mumps and rubella (MMR) vaccine

ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກ ທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ ແນະນຳສຳລັບໂຄງການສັກຢາປ້ອງກັນໂຣກສຳລັບພວກວັຍໜຸ່ມ ໃນໂຮງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.

## ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈັ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກຄໍຕີບ, ໂຣກບາດ ທະຍັກ ແລະ ໂຣກ ໄອໄກ່ ຈົ່ງຂຽນຕື່ມຟອມຍິນຍອມແລ້ວເອົາຟອມ ຍິນຍອມທີ່ທ່ານເຊັນຮັບແລ້ວໃຫ້ລູກທ່ານນຳກັບໄປໃຫ້ ໂຮງຮຽນ.
- ຖ້າທ່ານ **ບໍ່** ຕ້ອງການໃຫ້ລູກທ່ານສັກຢາປ້ອງກັນໂຣກ ຄໍຕີບ, ໂຣກບາດທະຍັກ ແລະ ໂຣກ ໄອໄກ່ **ຢ່າ** ຂຽນຕື່ມຟອມຍິນຍອມນັ້ນ ຫຼື ສົ່ງຟອມກັບໄປໃຫ້ໂຮງຮຽນ.

## ຖ. ໂຣກຫັດ ໂຣກໝາກເບີດ ແລະ ໂຣກຫັດເຢັຍຣະມັນ (ຣູແບລລາ) ແມ່ນຫຍັງ?

**ໂຣກຫັດ** ເປັນເຊື້ອໄວຣັສທີ່ຕິດຕໍ່ງ່າຍ ແລະ ກໍ່ໃຫ້ເກີດເປັນໄຂ້ ໄອ ແລະ ຕຸ່ມຄັນ. ອາການແຊກຊ້ອນທີ່ມີເລື້ອຍໆຮວມມີ ໂຣກປອດບວມ, ອາການຖອກທ້ອງ ແລະ ຫູຊັ້ນກາງອັກເສບ. ການອັກເສບໃນສະໝອງຈະເກີດຂຶ້ນປະມານ 1 ໃນທຸກໆ 1,000 ກໍລະນີ ແລະ 10-15%ໃນກໍລະນີເຫຼົ່ານີ້ຈະເສັຍຊີວິດ ແລະ ຫຼາຍຄົນຈະເປັນ ໂຣກສະໝອງພິການ ຕລອດຊີວິດ.

**ໂຣກໝາກເບີດ** ເປັນໂຣກຕິດຕໍ່ທີ່ກໍ່ໃຫ້ຕ່ອມຢູ່ຄໍໃຄ່ຂຶ້ນ ແລະ ເປັນໄຂ້. ປະມານ10% ຂອງຄົນທີ່ຕິດເຊື້ອຈະພັດທະນາໄປສູ່ການອັກເສບຂອງເຍື່ອຫຸ້ມສະ ໝອງ ແລະສາຍກະດູກສັນຫຼັງ (ສັນຍານ ແລະ ອາການຂອງໂຣກເຍື່ອຫຸ້ມສມອງ ອັກເສບ) ໃນຂະນະທີ່15-30% ຂອງຜູ້ຊາຍທີ່ຜ່ານວັຍໜຸ່ມແລ້ວຈະພັດທະນາ ໄປສູ່ການເປັນໂຣກໝ່ວຍອັນທະອັກ ເສບ (orchitis). ການຕິດໂຣກໝາກ ເບີດໃນຊ່ວງລະຍະສາມເດືອນທຳອິດຂອງການຕັ້ງທ້ອງອາດຈະສົ່ງຜົນໃຫ້ມີ ການແທ້ງລູກເອງໄດ້.

**ໂຣກ ຣູແບລລາ** (ໂຣກຫັດເຢັຍຣະມັນ) ເປັນໂຣກທີ່ຕິດຕໍ່ ດ້ວຍເຊື້ອໄວຣັສທີ່ກໍ່ ໃຫ້ເກີດຕຸ່ມຄັນ ເປັນໄຂ້ ແລະ ຕ່ອມໃຄ່ຂຶ້ນ. ມັນສາມາດເຮັດໃຫ້ເດັກຢູ່ໃນທ້ອງ ແມ່ຍິງ ຖືພາມີຮູບຮ່າງພິການຢ່າງຮ້າຍແຮງໄດ. ມີຈຳນວນສູງ ເຖິງ 90% ຂອງ ເດັກ ທີ່ຕິດ ໂຣກນີ້ໃນຊ່ວງລະຍະ ສາມ ເດືອນທຳອິດຂອງການຕັ້ງທ້ອງ ຈະມີ ອາການຜິດປົກກະຕິ ມາຕັ້ງແຕ່ເກີດ ຮວມເຖິງຄວາມພິການທາງປັນຍາ, ຫູໜວກ ຕາບອດ ຫຼື ຫົວໃຈພິການ.

## ຖ. ໂຣກຫັດ ໂຣກໝາກເບີດ ແລະ ໂຣກຣູແບລລາ ແພ່ຜາຍໄດ້ ຢ່າງໃດ?

ເຊື້ອໄວຣັສເຫຼົ່ານີ້ແພ່ຜາຍໄດ້ໂດຍການໄອ ແລະ ຈາມ. ໂຣກຫັດເປັນນຶ່ງໃນບັນດາ ໂຣກທີ່ແພ່ຜາຍ ແລະ ຕິດຕໍ່ງ່າຍທີ່ສຸດ. ພຽງແຕ່ຢູ່ຮ່ວມຫ້ອງກັບຜູ້ທີ່ເປັນໂຣກນີ້ ກໍສາມາດເຮັດໃຫ້ຕິດແປດໄດ້.

## ຖ. ຢາວັກຊີນທຳງານຢ່າງໃດ?

ຢາວັກຊີນທຳງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດ ເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສຳຜັດ ກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດຕອບ ຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະ ຫຍາຍຕົວ ຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

## ຖ. ຢາວັກຊີນມີປະສິດທິຜົນເທົ່າໃດ?

ຢາສັກກັນໂຣກ MMR ມີປະສິດທິພາບສູງຫຼາຍໃນການ ປ້ອງກັນການຕິດໂຣກ ຫັດ ໂຣກໝາກເບີດ.

## ຖ. ແມ່ນໃຜທີ່ຄວນໄດ້ຮັບການສັກຢານີ້?

ການສັກຢາປ້ອງກັນ ໂຣກຫັດ ໂຣກໝາກເບີດ ແລະ ໂຣກຣູແບລລາ (MMR) ສອງເທື່ອກໍພຽງພໍສຳລັບວັຍຣຸ່ນເພື່ອສ້າງພູມຕ້ານທານອັນສົມບູນຈາກ ໂຣກຫັດ ໂຣກໝາກເບີດ ແລະ ໂຣກຣູແບລລາ ນອກຈາກວ່າ ພວກເຂົາເຈົ້າເຄີຍໄດ້ ສັກຢານີ້ມາແລ້ວສອງເທື່ອ.

## ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາສັກປ້ອງກັນໂຣກ MMR ນີ້ ບໍ່ຄວນ ສັກໃຫ້ບຸກຄົນທີ່:

- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາປ້ອງກັນໂຣກ MMR ຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຕໍ່ສ່ວນປະສົມໃດນຶ່ງຂອງຢາສັກ (ຕາມບັນຊີ ຢູ່ໜ້າຕໍ່ໄປ)
- ຖືພາ (ຄວນຫຼີກເວັ້ນການຖືພາ 28 ວັນຫຼັງຈາກການສັກຢາ)
- ເຄີຍໄດ້ຮັບການສັກຢາດ້ວຍເຊື້ອທີ່ມີຊີວິດພາຍໃນ 4 ອາທິດທີ່ຜ່ານມາ ເຊັ່ນ ໂຣກ ວາຣີແຊລລາ (ໂຣກໝາກໃສ) BCG (ວັນນະໂຣກ) ຫຼື ໂຣກ ໝາກເຫຼືອງ
- ເຄີຍໄດ້ຮັບການປ່ຽນເລືອດ/ສັກຢາເພື່ອສ້າງພູມຕ້ານ ທານ ພາຍໃນປີທີ່ຜ່ານມາ
- ຂາດພູມຕ້ານທານ ເຊັ່ນ:
  - (i) ຄົນທີ່ມີໂຣກ ເຮັສໄອວີ/ເອດສ໌
  - (ii) ຄົນທີ່ກິນຢາ ສ້າງຄວາມສົມດຸນໃຫ້ຮ່າງກາຍ (corticosteroids) ຂນາດຫຼາຍ
  - (iii) ຄົນທີ່ພວມຮັບການຮັກສາດ້ວຍຣະບົບທີ່ເຮັດໃຫ້ພູມຕ້ານທານຕ່ຳ, ການບຳບັດດ້ວຍແສງຣັງສີ ຫຼື ເອັກຊ໌ເຣ
  - (iv) ຄົນທີ່ປ່ວຍສະພາບຮ້າຍແຮງຈາກຣະບົບເຊລເຍື່ອນ້ຳເຫຼືອງ ຮວມເຖິງ ເນື້ອງອກ ມະເຮັງເມັດເລືອດຂາວ ແລະ ໂຣກ Hodgkin

## ຖ. ຢາສັກກັນໂຣກ MMR ບັນຈຸທາດເສີມ ຫຍັງແດ່?

ຢາສັກ MMR ບັນຈຸ ທາດນ້ຳຕານ, ນີໂອມີຊິນ ນ້ຳກົດ ອາມິໂນ ຊໍບິໂທລ ແລະ ແມນນິໂທລ. ສ່ວນປະສົມດັ່ງກ່າວນີ້ມີຢູ່ໃນຢາສັກກັນໂຣກ ປະຣິມານນ້ອຍທີ່ສຸດ ເພື່ອຊ່ວຍໃຫ້ຢາກັນໂຣກທຳງານ ຫຼື ທຳໜ້າທີ່ປ້ອງກັນບໍ່ໃຫ້ຢາເສັຍ.

## ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບຳບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນຳໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນຳໃຊ້ອີກດ້ວຍ.

## ຖ. ອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກ MMR ມີຫຍັງແດ່?

ຢາສັກປ້ອງກັນໂຣກ MMR ປອດໄພ ມີປະສິດທິພາບ ແລະ ມີພະລັງຕ້ານທານດີ. ຕາມປົກກະຕິແລ້ວອາການຂ້າງຄຽງຈະມີພໍເບົາບາງແລະອາດຮວມເຖິງຄວາມຮູ້ສຶກ ບໍ່ສະບາຍ ເປັນໄຂ້ ແລະ/ຫຼື ເປັນຕຸ່ມຄັນ (ຊຶ່ງບໍ່ເປັນອາ ການຕິດຕໍ່ ແລະ ອາດເກີດຂຶ້ນພາຍໃນລະຫວ່າງ 5-12 ມື້ ຫຼັງຈາກສັກຢາກັນໂຣກ MMR). ອາການຂ້າງຄຽງທີ່ຮ້າຍແຮງ ຮວມເຖິງ ອາການແພ້ອັນຮຸນແຮງ (ເບິ່ງຂໍ້ມູນຢູ່ຂ້າງລຸ່ມ), ຕ່ອມນ້ຳເຫຼືອງໃຄ່, (ລະຍະສັ້ນ ເຈັບຕາມຂໍ້) ແລະ ເກັດໃນເມັດເລືອດບໍ່ປົກກະຕິ (ອາການຟົກຊ້ຳ/ເລືອດອອກຫຼາຍຂຶ້ນ) ແລະ ອາການດັ່ງກ່າວເກີດຂຶ້ນຍາກທີ່ສຸດ. ຂໍ້ມູນເພີ່ມຕື່ມກ່ຽວກັບອາການຂ້າງຄຽງແມ່ນມີໄວ້ໃຫ້ທີ່ກອງຂໍ້ມູນເລື່ອງຢາ ສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

## ຖ. Anaphylaxis (ອາການແພ້ຢ່າງຮຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ. **ມັນຈະເກີດໄດ້*ຍາກທີ່ສຸດ* ຫຼັງຈາກການສັກຢາ**. ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

## ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼື ຄິດວ່າລາວອາດຈະຖືພາ ບໍ?

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງວ່າ ພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່. ຖ້າຄຳຕອບຂອງນັກຮຽນຕໍ່ຄຳຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນຳໃຫ້ປຶກສາຫາລື ບັນຫານີ້ກັບພໍ່ແມ່/ຜູ້ປົກຄອງຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບລາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄຳແນະນຳ ການອູ້ມຊູ ແລະ ການຊີ້ນຳ.

**ບັນດານັກຮຽນຍິງທີ່ໄດ້ຮັບການສັກຢາປ້ອງກັນໂຣກ MMR ບໍ່ຄວນຖືພາພາຍໃນ 28 ມື້ຫຼັງຈາກການ ສັກຢານັ້ນ.**

## ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕີໂຊນ ຫຼື ເປຣັດນີໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?

ຢາສັກ ປ້ອງກັນໂຣກ MMR ສາມາດສັກໃຫ້ໃຜຜູ້ນຶ່ງທີ່ເປັນໂຣກຫືດໄດ້ໂດຍປອດໄພ ບໍ່ວ່າພວກເຂົາເຈົ້າຈະພວກກິນຢາຫຍັງຢູ່.

## ຖ. ແມ່ນໃຜສາມາດຍິນຍອມຕໍ່ການສັກຢາປ້ອງກັນໂຣກ ແລະ ຈະສາມາດຖອນການຍິນຍອມໄດ້ບໍ່?

ມີແຕ່ພໍ່ແມ່/ຜູ້ປົກຄອງເທົ່ານັ້ນທີ່ສາມາຍິນຍອມຕໍ່ການສັກ ຢາປ້ອງກັນໂຣກ ສຳລັບນັກຮຽນທີ່ມີອາຍຸຕ່ຳກວ່າ 18ປີ. ນັກຮຽນທີ່ມີອາຍຸ 18ປີແລະຫຼາຍກວ່າ ອາດຈະຍິນຍອມຕໍ່ການ ສັກຢາປ້ອງກັນໂຣກຂອງຕົນເອງ ແລະ ຄວນຂຽນຕື່ມພ້ອມທັງເຊັນຟອມຍິນຍອມບ່ອນທີ່ບົ່ງບອກວ່າ 'ພໍ່ແມ່/ຜູ້ປົກຄອງ'. ການຍິນຍອມສາມາດຖືກຖອນຄືນໄດ້ທຸກເວລາ ໂດຍການແຈ້ງໄປຫາທາງໂຮງຮຽນເປັນລາຍລັກອັກສອນ ເລື່ອງການຖອນການຍິນຍອມ ຫຼື ໂທຣະສັບຫາໂຮງຮຽນເພື່ອຖອນການຍິນຍອມນັ້ນ.

## ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສຳເນົາໃບລາຍງານປະຫວັດການສັກຢາ AIR ຂອງລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກຢາດ້ວຍຕົນເອງໄດ້ດັ່ງນີ້:

- ນຳໃຊ້ບັນຊີ Medicare online ຜ່ານ myGov my.gov.au/
- ນຳໃຊ້ແອັບ Medicare Express Plus www.humanservices.gov.au/individuals/subjects/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ 1800 653 809.

## ຖ. ຂ້ອຍຈະເຮັດຢ່າງໃດໄດ້ແດ່ຖ້າລູກຂ້ອຍພາດຈາກການສັກຢາຢູ່ໂຮງຮຽນຍ້ອນວ່າປ່ວຍ ຫຼື ຂາດໂຮງຮຽນ ໃນມື້ທີ່ພະຍາບານມາໂຮງຮຽນ?

ທ່ານຄວນຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ຈັດໃຫ້ລູກຂອງທ່ານໄດ້ສັກຢາ.

## ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນຄຳຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ). ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງ ອອສເຕຣເລັຍ (AIR) ເພື່ອວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

## ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນໂຮງຮຽນໄດ້ຈາກໃສ?

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່: www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານ ທີ່ເບີ 1300 066 055

September 2022 © NSW Ministry of Health. SHPN (HP NSW) 220731-1-15

## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂື້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະລຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂື້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະລຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


220731-2-15

Lao

# ໃບຍິນຍອມສໍາລັບການສັກຢາປ້ອງກັນໂຣກຫັດ ໂຣກໝາກເບີດ ແລະ ໂຣກ ຣູແບລລາ (MMR)

NSW GOVERNMENT

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະຣຸນາຂຽນເປັນ**ຕົວພິມ**ໂດຍໃຊ້ປາກກາສີດໍາ ຫຼື ສີຟ້າ.

### 1. ຣາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ   ___ / ___ / 2 0 __

ເພດ   ☐ ຜູ້ຊາຍ ☐ ແມ່ຍິງ ☐ ບໍ່ກໍານົດ/ລະຫວ່າງສອງເພດ/ບໍ່ລະບຸ

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນໍາເບີຂອງ ເມດິແຄຣ   ☐ ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດິແຄຣ

### 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ ☐ ແມ່ນ, ເປັນຊາວອາບໍຣິຈິໂນລ ☐ ແມ່ນ, ເປັນຊາວ ທໍເຣສເຕຣດ ໄອແລນເດີ ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

### 3. ຣາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບ ຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີ ຂອງ ການສັກຢາປ້ອງກັນໂຣກຫັດ ໂຣກໝາກເບີດ ແລະ ໂຣກ ຣູແບລລາ (MMR).

ຂ້ອຍໃຫ້ການຍິນຍອມມານະທີ່ນີ້ສໍາລັບລູກຂ້ອຍທີ່ມີ ຊື່ຢູ່ຂ້າງເທິງນີ້ ເພື່ອໃຫ້ໄດ້ຮັບການສັກຢາປ້ອງກັນ ໂຣກຫັດ ໂຣກໝາກເບີດ ແລະ ໂຣກ ຣູແບລລາ (MMR) ສອງຊຸດ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປື້ມຂໍ້ມູນ ສໍາລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ   ລະຫັດໄປສະນີ

ນໍາເບີໂທຣະສັບມືຖື   ເລກໂທຣະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຮວມທັງລະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ   ✕

ວັນທີ   ___ / ___ / 2 0 __

## ບັນທຶກການສັກຢາປ້ອງກັນໂຣກ MMR

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

______________________

**ສຳລັບຫ້ອງການໃຊ້ເທົ່ານັ້ນ**

ຂນາດຢາ 1

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ☐☐ ☐☐

ໝາຍເລກຂອງຢາສັກ ☐☐☐☐☐☐☐☐☐☐☐☐

ລາຍເຊັນຂອງພະຍາບານ ✕ ______________

ວັນທີ ☐☐ / ☐☐ / 2 0 ☐☐

ຂນາດຢາ 2

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ☐☐ ☐☐

ໝາຍເລກຂອງຢາສັກ ☐☐☐☐☐☐☐☐☐☐☐☐

ລາຍເຊັນຂອງພະຍາບານ ✕ ______________

ວັນທີ ☐☐ / ☐☐ / ☐☐☐☐

**ຄວາມເຫັນຂອງພະຍາບານ**

ເຫັນຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

## **ພໍ່ແມ່/ຜູ້ປົກຄອງ** ບັນທຶກການສັກຢາປ້ອງກັນໂຣກ ໂຣກຫັດ ໂຣກໝາກເບີດ ແລະ ໂຣກ ຣູແບລລາ (MMR)

### ບັນທຶກການສັກຢາປ້ອງກັນໂຣກ MMR — ຂນາດຢາ 1

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

______________________

**ສຳລັບຫ້ອງການໃຊ້ເທົ່ານັ້ນ**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ☐☐ : ☐☐

ໝາຍເລກຂອງຢາສັກ ☐☐☐☐☐☐☐☐☐☐☐☐

ລາຍເຊັນຂອງພະຍາບານ ✕ ______________

ວັນທີ ☐☐ / ☐☐ / 2 0 ☐☐

### a ບັນທຶກການສັກຢາປ້ອງກັນໂຣກ MMR — ຂນາດຢາ 2

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

______________________

**ສຳລັບຫ້ອງການໃຊ້ເທົ່ານັ້ນ**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) ☐☐ : ☐☐

ໝາຍເລກຂອງຢາສັກ ☐☐☐☐☐☐☐☐☐☐☐☐

ລາຍເຊັນຂອງພະຍາບານ ✕ ______________

ວັນທີ ☐☐ / ☐☐ / 2 0 ☐☐

ຕົວຢ່າງໃຫ້ຄຳແປ
ກະລຸນາຂຽນຕື່ມ
ຟອມຍິນຍອມເປັນ
ພາສາອັງກິດ

# ຢາສັກປ້ອງກັນໂຣກໂປລີໂອ

Polio vaccine

ກົມ ອະນາໄມ ແຫ່ງຣັດ ນຊວ ສະເໜີການສັກຢາປ້ອງກັນໂຣກທີ່ ສະພາການຄົ້ນຄວ້າດ້ານສຸຂພາບແລະການແພດແຫ່ງຊາດໄດ້ແນະນຳສຳລັບໂຄງການສັກຢາປ້ອງກັນໂຣກສຳລັບພວກວັຍໜຸ່ມໃນໂຮງຮຽນ. ຕ້ອງມີໜັງສືຍິນຍອມທີ່ພໍ່ແມ່/ຜູ້ປົກຄອງເຊັນຮັບ.

## ຂັ້ນຕອນຕໍ່ໄປຂອງທ່ານ

- ອ່ານເຈັ້ຍຂໍ້ມູນ ນີ້ໃຫ້ດີ.
- ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ສັກຢາປ້ອງກັນໂຣກໂປລີໂອ ຈົ່ງຂຽນຕື່ມຟອມຍິນຍອມແລ້ວເອົາຟອມຍິນຍອມທີ່ທ່ານເຊັນຮັບແລ້ວໃຫ້ລູກທ່ານນຳກັບໄປໃຫ້ ໂຮງຮຽນ.
- ຖ້າທ່ານ ບໍ່ ຕ້ອງການໃຫ້ລູກທ່ານສັກຢາປ້ອງກັນໂຣກ ໂປລີໂອ ຢ່າ ຂຽນຕື່ມຟອມຍິນຍອມນັ້ນ ຫຼື ສົ່ງຟອມກັບໄປໃຫ້ໂຮງຮຽນ.

## ຖ. ໂຣກ ໂປລີໂອ (ວັດຖຸສີເທົ່າຂອງໄຂສັນຫຼັງອັກເສບ) ແມ່ນຫຍັງ?

ໂຣກໂປລີໂອແມ່ນໂຣກຕິດຕໍ່ທີ່ເກີດຈາກເຊື້ອໄວຣັສໂປລີໂອຊຶ່ງສາມາດເຮັດໃຫ້ເປັນອຳມະພາດ ແລະເສັຍຊີວິດໄດ້. ສ່ວນໃຫຍ່ຂອງຄົນທີ່ຕິດ ເຊື້ອໂຣກໂປລີໂອຈະບໍ່ມີອາການໃດໆ. ການ ເປັນໄຂ້ໜ້ອຍນຶ່ງ ເຈັບຫົວ ມີອາການຊຶມ ປວດຮາກແລະຮາກຈະເກີດຂຶ້ນໃນປະມານ 10% ຂອງຜູ້ທີ່ຕິດໂຣກນີ້. ເຖິງແມ່ນວ່າສ່ວນຫຼາຍຂອງ ຄົນເຫຼົ່ານີ້ຈະເຊົາຂາດຈາກໂຣກນີ້ ແຕ່ມີປະມານ 2% ທີ່ຈະສືບຕໍ່ມີອາການເຈັບປວດຢ່າງໜັກຕາມ ກ້າມເນື້ອທາງຫຼັງ ຫຼື ຄໍແຂງທີ່ເກີດຈາກເນື້ອເຍື່ອຫຸ້ມ ສມອງອັກເສບ. ໜ້ອຍກວ່າ 1% ຂອງຜູ້ຕິດເຊື້ອ ໂຣກນີ້ຈະມີອາການອ່ອນເພັຍທີ່ເອີ້ນວ່າ ອັມມະພາດອ່ອນເພັຍອັນຮ້າຍແຮງຊຶ່ງສາມາດກະທົບຕໍ່ແຂນຂາ, ກ້າມເນື້ອຢູ່ຫົວແລະຄໍ ແລະ ບັນດາ ກ້າມເນື້ອທີ່ໃຊ້ສຳລັບຫາຍໃຈ.

## ຖ. ໂຣກໂປລີໂອແຜ່ພາຍໄດ້ຢ່າງໃດ?

ໂຣກໂປລີໂອແຜ່ພາຍໄດ້ດ້ວຍການພົວພັນແບບໃກ້ຊິດກັບຄົນທີ່ຕິດເຊື້ອໂຣກແລ້ວໂດຍຜ່ານການສຳຜັດຖືກອາຈົມ(ຕົວຢ່າງຢູ່ມືທີ່ບໍ່ໄດ້ລ້າງ) ຫຼື ນ້ຳລາຍຈາກຜູ້ທີ່ຕິດເຊື້ອໂຣກ. ເຊື້ອໄວຣັສໂປລີໂອເຂົ້າໄປ ໃນຮ່າງກາຍໂດຍຜ່ານທາງດັງຫຼື ປາກ ແລະ ການ ຕິດແປດເລີ້ມຈາກໃນຊ່ອງທ້ອງ. ຕໍ່ມາມັນກໍຈະເຂົ້າໄປໃນເສັ້ນເລືອດແລະຈະນຳຕໍ່ໄປຫາສ່ວນຕ່າງໆຂອງ ຮ່າງກາຍຮວມເຖິງລະບົບເສັ້ນປະສາດ. ບັນດາກໍ ຣະນີຕ່າງໆສ່ວນຫຼາຍຈະຕິດເຊື້ອໄດ້ພາຍໃນເວລາ ກ່ອນ 10ມື້ ແລະ ຫຼັງ 10ມື້ຂອງການອອກຣິດຂອງ ອາການ.

## ຖ. ຢາວັກຊິນທຳງານຢ່າງໃດ?

ຢາວັກຊິນທຳງານໂດຍການໄປກະຕຸ້ນລະບົບພູມຄຸ້ມກັນເພື່ອຕໍ່ສູ້ກັບການຕິດເຊື້ອໂຣກບາງຢ່າງ. ຖ້າວ່າຄົນຜູ້ນຶ່ງທີ່ໄດ້ສັກຢາປ້ອງກັນໂຣກແລ້ວມີການສຳຜັດກັບການຕິດ ເຊື້ອໂຣກເຫຼົ່ານີ້ ລະບົບພູມຄຸ້ມກັນຂອງພວກ ເຂົາກໍຈະສາມາດຕອບຮັບໄດ້ໂດຍມີປະສິດທິພາບຫຼາຍຂຶ້ນ ພ້ອມທັງການປ້ອງກັນການຂະຫຍາຍຕົວຂອງເຊື້ອໂຣກ ຫຼື ການຫຼຸດຜ່ອນຄວາມຮ້າຍແຮງຂອງມັນໄດ້ດີຂຶ້ນ.

## ຖ. ຢາສັກປ້ອງກັນໂຣກໂປລີໂອມີປະສິດທິພາບ ຢ່າງໃດ?

ຢາສາມເຂັມຂອງຊຸດທຳອິດຂອງຢາສັກປ້ອງກັນໂຣກ ໂປລີໂອມີປະສິດທິພາບຢ່າງຕ່ຳ 99% ໃນການຕໍ່ຕ້ານໂຣກນີ້.

## ຖ. ແມ່ນໃຜທີ່ຄວນໄດ້ຮັບການສັກຢານີ້?

ບັນດານັກຮຽນທີ່ຍັງບໍ່ທັນໄດ້ຮັບການສັກຢາປ້ອງກັນ ໂຣກໂປລີໂອຊຸດທຳອິດ (ສາມເຂັມຢ່າງຕ່ຳທ່າງກັນ 4ອາ ທິດ) ຄວນສັກຢານີ້. ໃນ ຂນະທີ່ນັກຮຽນສ່ວນຫຼາຍຈະໄດ້ ຮັບການສັກຢາປ້ອງກັນໂຣກໂປລີໂອຢ່າງຕ່ຳນຶ່ງຊຸດ ແຕ່ນັກຮຽນທີ່ຮຽນຢູ່ ສູນຮຽນພາສາອັງກິດແບບເຂັ້ມງວດ (Intensive English Centres) ຈະໄດ້ຮັບ 2 ຊຸດ ແລະ ບັນດາພໍ່ແມ່ຈະຖືກແຈ້ງໃຫ້ຊາບເພື່ອ ໃຫ້ໄປຫານາຍໝໍໃນທ້ອງຖິ່ນເພື່ອສັກຢາຊຸດທີສາມ, ຖ້າຈຳເປັນ.

## ຖ. ແມ່ນໃຜທີ່ບໍ່ຄວນໄດ້ຮັບການສັກຢານີ້?

ຢາປ້ອງກັນໂຣກ ໂປລີໂອ ນີ້ບໍ່ຄວນສັກໃຫ້ຜູ້ຄົນທີ່:

- ເຄີຍມີອາການແພ້ອັນຮຸນແຮງຫຼັງຈາກການສັກຢາຄັ້ງກ່ອນ
- ເຄີຍມີອາການແພ້ອັນຮຸນແຮງຕໍ່ສ່ວນປະສົມໃດນຶ່ງຂອງຢາສັກ (ຈັດເປັນບັນຊີລາຍການໄວ້ຢູ່ໜ້າຕໍ່ໄປ)

## ຖ. Anaphylaxis (ອາການແພ້ຢ່າງຮຸນແຮງ) ແມ່ນຫຍັງ?

Anaphylaxis ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະຕາຍໄດ້ຖ້າບໍ່ປິ່ນປົວໃຫ້ໄວ.

**ມັນຈະເກີດໄດ້*ຍາກທີ່ສຸດ* ຫຼັງຈາກການສັກຢາ.** ພວກພະຍາບານທີ່ເຮັດວຽກດ້ານ ການສ້າງພູມຕ້ານທານໂຣກຢູ່ຕາມໂຮງຮຽນກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

## ຖ. ຂ້ອຍຄວນຈະເຮັດແນວໃດຖ້າຂ້ອຍບໍ່ມີບັນທຶກ ຫຼື ຂ້ອຍບໍ່ສາມາດຈື່ໄດ້ວ່າລູກຂ້ອຍໄດ້ສັກຢາປ້ອງກັນ ໂຣກໂປລີໂອແລ້ວ?

ເດັກນ້ອຍຫຼືຜູ້ໃຫຍ່ສາມາດສັກຢາປ້ອງກັນ ໂຣກໂປລີໂອໄດ້ດ້ວຍຄວາມປອດພັຍຖ້າຫາກວ່າບໍ່ມີ ຫຼັກຖານຂອງການສັກຢາປ້ອງກັນໂຣກ ໂປລີໂອມາກ່ອນ.

## ຖ. ຢາສັກກັນໂຣກໂປລີໂອນີ້ບັນຈຸຫຍັງແດ່?

ຢາສັກນີ້ ບັນຈຸ phenoxyethanol, formaldehyde, polysorbate 80 ແລະ neomycin ໜ້ອຍນຶ່ງ, streptomycin, polymyxin B ແລະ bovine serum albumin.

ສ່ວນປະສົມດັ່ງກ່າວນີ້ມີຢູ່ໃນຢາສັກກັນໂຣກ ປະຣິມານນ້ອຍທີ່ສຸດເພື່ອຊ່ວຍໃຫ້ຢາກັນໂຣກທຳງານ ຫຼື ທຳໜ້າທີ່ປ້ອງກັນບໍ່ໃຫ້ຢາເສັຍ.

ຢາວັກຊິນນີ້ໄດ້ ສຳ ຜັດກັບວັດສະດຸທີ່ອອກມາຈາກ bovine (ສັດໃຫຍ່ເຊັ່ນງົວ) ໃນລະຫວ່າງການຜະລິດ.

## ຖ. ຢາສັກປ້ອງກັນໂຣກປອດໄພເທົ່າໃດ?

ຢາສັກປ້ອງກັນໂຣກຢູ່ໃນອອສເຕຣເລັຍນີ້ແມ່ນປອດໄພຫຼາຍ ແລະ ຕ້ອງຜ່ານການກວດກາຢ່າງເຄັ່ງຄັດໂດຍ ອົງການຄວບຄຸມຢາເພື່ອການບຳບັດ (TGA) ກ່ອນທີ່ຈະໄດ້ຮັບອະນຸຍາດໃຫ້ນຳໃຊ້ໄດ້. ນອກຈາກນີ້ແລ້ວ ອົງການ (TGA) ຍັງໄດ້ຄວບຄຸມຄວາມປອດໄພຂອງຢາສັກໃນເວລາທີ່ຖືກນຳໃຊ້ອີກດ້ວຍ.

## ຖ. ອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກ ໂປລີໂອ ມີຫຍັງແດ່?

ອາການຂ້າງຄຽງ ມີພຽງເບົາບາງ ແລະ ຕາມປົກກະຕິແລ້ວຈະເປັນຮອຍແດງ ມີອາການເຈັບ ແລະ ໃຄ່ຕາມບໍຣິເວນສັກຢາ ຫຼື ເປັນໄຂ້. ອາການຂ້າງຄຽງທີ່ຮ້າຍແຮງນັ້ນມີນ້ອຍທີ່ສຸດ. ຂໍ້ມູນເພີ່ມຕື່ມກ່ຽວກັບອາການຂ້າງຄຽງແມ່ນມີໄວ້ໃຫ້ທີ່ ກອງຂໍ້ມູນເລື່ອງຢາ ສຳລັບຜູ້ຊົມໃຊ້ [Consumer Medicine Information (CMI)] ສຳລັບຢາສັກປ້ອງກັນໂຣກແມ່ນມີໄວ້ທີ່ www.health.nsw.gov.au/schoolvaccination. ບັນດາພໍ່ແມ່ທີ່ເປັນກັງວົນກ່ຽວກັບອາການຂ້າງຄຽງຕ່າງໆຫຼັງຈາກການສັກຢານັ້ນ ຄວນຕິດຕໍ່ນາຍໝໍຂອງພວກເຂົາຜູ້ຊຶ່ງຈະເປັນຜູ້ລາຍງານໄປຫາພະແນກສຸຂພາບ ຊຸມຊົນໃນທ້ອງຖິ່ນອີກດ້ວຍ.

## ຖ. ຄວນສັກຢາກັນໂຣກນີ້ແກ່ນັກຮຽນຍິງທີ່ຖືພາຫຼື ຄິດວ່າລາວອາດຈະຖືພາ ບໍ?

ບໍ່. ນັກຮຽນຍິງຜູ້ໃດທີ່ຖືພາ ຫຼື ຄິດວ່າລາວອາດຈະຖືພາບໍ່ຄວນສັກຢາກັນໂຣກນີ້. ໃນວັນທີ່ເປີດຄລີນິກ ພະຍາບານສັກຢາຈະຖາມບັນດານັກຮຽນຜູ້ຍິງວ່າ ພວກເຂົາເຈົ້າຖືພາ ຫຼື ຄິດວ່າອາດຈະຖືພາຫຼືບໍ່. ຖ້າຄຳຕອບຂອງນັກຮຽນຕໍ່ຄຳຖາມນີ້ວ່າ ແມ່ນ ລາວກໍຈະບໍ່ໄດ້ສັກຢາ. ນັກຮຽນກໍຈະຖືກແນະນຳໃຫ້ປຶກສາຫາລື ບັນຫານີ້ກັບພໍ່ແມ່/ຜູ້ປົກຄອງຂອງລາວ ແລະ ຊອກຫາການຊ່ວຍເຫຼືອທາງດ້ານການແພດໃນທັນທີ. ນອກຈາກນີ້ລາວຍັງຈະໄດ້ຮັບຣາຍລະອຽດການຕິດຕໍ່ຂອງບໍຣິການການສົ່ງຕໍ່ດ້ານສຸຂພາບຊຶ່ງຈະໃຫ້ຄຳແນະນຳ ການອູ້ມຊູ ແລະ ການຊີ້ນຳ.

## ຖ. ຖ້າລູກຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕີໂຊນ ຫຼື ເປຣັດນິໂຊນ ດ້ວຍການໃຊ້ "ອັນເປົ່າ" ເດ?

ຢາສັກປ້ອງກັນໂຣກ ໂປລີໂອ ສາມາດສັກໃຫ້ໃຜຜູ້ນຶ່ງທີ່ເປັນໂຣກຫືດໄດ້ໂດຍປອດໄພ ບໍ່ວ່າພວກເຂົາເຈົ້າຈະພວກກິນຢາຫຍັງຢູ່.

## ຖ. ແມ່ນໃຜສາມາດຍິນຍອມຕໍ່ການສັກຢາປ້ອງກັນໂຣກ ແລະ ຈະສາມາດຖອນການຍິນຍອມໄດ້ບໍ່?

ມີແຕ່ພໍ່ແມ່/ຜູ້ປົກຄອງເທົ່ານັ້ນທີ່ສາມາຍິນຍອມຕໍ່ການສັກ ຢາປ້ອງກັນໂຣກສຳລັບນັກຮຽນທີ່ມີອາຍຸຕ່ຳກວ່າ 18ປີ. ນັກຮຽນທີ່ມີອາຍຸ 18ປີແລະຫຼາຍກວ່າອາດຈະຍິນຍອມຕໍ່ການ ສັກຢາປ້ອງກັນໂຣກຂອງຕົນເອງ ແລະ ຄວນຂຽນຕື່ມພ້ອມທັງເຊັນຟອມຍິນຍອມບ່ອນທີ່ບົ່ງບອກວ່າ 'ພໍ່ແມ່/ຜູ້ປົກຄອງ'. ການຍິນຍອມສາມາດຖືກຖອນຄືນໄດ້ທຸກເວລາ ໂດຍການແຈ້ງໄປຫາທາງໂຮງຮຽນເປັນລາຍລັກອັກສອນ ເລື້ອງການຖອນການຍິນຍອມ ຫຼື ໂທຣະສັບຫາໂຮງຮຽນເພື່ອຖອນການຍິນຍອມນັ້ນ.

## ຖ. ຂ້ອຍຈະເຂົ້າເຖິງບັນທຶກການສັກຢາໄດ້ຢ່າງໃດ?

ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດໃສ່ທະບຽນສັກຢາປ້ອງກັນໂຣກ (AIR) ເພື່ອໃຫ້ມັນສາມາດເຊື່ອມຕໍ່ກັບປະຫວັດການສັກຢາປ້ອງກັນໂຣກທີ່ມີຢູ່ແລ້ວຂອງລູກທ່ານ.

ບັນດາພໍ່ແມ່ສາມາດຂໍສຳເນົາໃບລາຍງານປະຫວັດການສັກຢາ AIR ຂອງລູກພວກເຂົາໄດ້ທຸກເວລາ ຈົນຮອດລູກພວກເຂົາອາຍຸ 14 ປີຂຶ້ນໄປ, ແລະ ນັກຮຽນທີ່ມີອາຍຸ 14 ປີຂຶ້ນໄປສາມາດຂໍໃບປະກາດປະຫວັດການສັກຢາດ້ວຍຕົນເອງໄດ້ດັ່ງນີ້:

- ນຳໃຊ້ບັນຊີ Medicare online ຜ່ານ myGov my.gov.au/
- ນຳໃຊ້ແອັບ Medicare Express Plus www.humanservices.gov.au/individuals/subjects/express-plus-mobile-apps
- ໂທຫາສາຍສອບຖາມທົ່ວໄປ AIR ທີ່ເບີ 1800 653 809.

## ຖ. ຂ້ອຍຈະເຮັດແນວໃດຖ້າລູກຂ້ອຍພາດຈາກການສັກຢາທີ່ໂຮງຮຽນຍ້ອນເຈັບປ່ວຍ ຫຼື ຂາດໂຮງຮຽນໃນມື້ທີ່ພະຍາບານມາ?

ທ່ານຄວນຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ຈັດໃຫ້ລູກຂອງທ່ານໄດ້ສັກຢາ.

## ຖ. ຈະມີຫຍັງເກີດຂຶ້ນຕໍ່ຂໍ້ມູນຂອງລູກຂ້ອຍ?

ຂໍ້ມູນທີ່ທ່ານເອົາໃຫ້ຢູ່ຟອມຍິນຍອມການສັກຢາກັນໂຣກ ນັ້ນຈະມີເງື່ອນໄຂໃຫ້ຖືເປັນຄວາມລັບ ແລະ ມີການຄຸ້ມຄອງຄວາມເປັນສ່ວນຕົວໃນກົດໝາຍຢ່າງເຄັ່ງຄັດທີ່ມີຢູ່ໃນກົດໝາຍຂອງຣັດ NSW ແລະ ຣັຖບານກາງ (ເບິ່ງຢູ່ໃນຄຳຖແລງຄວາມເປັນສ່ວນຕົວທີ່ຄັດຕິດມາ). ຂໍ້ມູນນີ້ຈະຖືກເອົາເຂົ້າໃສ່ໄວ້ຢູ່ໃນກອງທະບຽນການສັກຢາປ້ອງກັນໂຣກ ຂອງກົມອານາໄມ ຣັດ NSW ແລະ ແລ້ວກໍຈະຖືກອັບໂຫຼດເຂົ້າໄປຫາ ກອງລົງທະບຽນ ການສັກຢາປ້ອງກັນໂຣກແຫ່ງອອສເຕຣເລັຍ (AIR) ເພື່ອວ່າຈະສາມາດເຊື່ອມຕໍ່ເຂົ້າໄປຫາປະຫວັດການສັກຢາປ້ອງກັນໂຣກຂອງລູກທ່ານທີ່ມີຢູ່ແລ້ວ ແລະ ສາມາດເບິ່ງໄດ້ທີ່ MyGov.

## ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມກ່ຽວກັບການສັກຢາປ້ອງກັນໂຣກຢູ່ໃນໂຮງຮຽນໄດ້ຈາກໃສ?

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້:

- ໂດຍການເຂົ້າເບິ່ງເວັບໄຊຕ໌ຂອງກົມອະນາໄມແຫ່ງຣັດ ນຊວ ທີ່: www.health.nsw.gov.au/schoolvaccination
- ໂດຍການຕິດຕໍ່ ພະແນກ ອະນາໄມຊຸມຊົນໃນທ້ອງຖິ່ນຂອງທ່ານ ທີ່ເບີ 1300 066 055

## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະລຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


## ຕ້ອງເຮັດຫຍັງແດ່ຫຼັງຈາກການສັກຢາປ້ອງກັນໂຣກ

- ເກັບບັນທຶກນີ້ໄວ້ ເພື່ອວ່າທ່ານອາດຈະຕ້ອງຖືກຂໍ ໃຫ້ເອົາຂໍ້ມູນນີ້ໃຫ້ໃນພາຍຫຼັງ.
- ຂໍ້ມູນກ່ຽວກັບການສັກຢາວັກຊີນຂອງລູກທ່ານຈະຖືກອັບໂຫຼດອັດຕະໂນມັດໄປໃສ່ການລົງທະບຽນສັກຢາປ້ອງກັນໂຣກອອສເຕຣເລັຍ (Australian Immunisation Register (AIR)). ທ່ານອາດຈະຕ້ອງການອັບເດດກັບນາຍໝໍ ຂອງທ່ານກ່ຽວກັບວັນທີຂອງການສັກຢາ.

## ຈະເຮັດແນວໃດຖ້າປະຕິກິລິຍາເກີດຂຶ້ນຢູ່ບໍລິເວນບ່ອນສັກຢາ

- ເອົາຜ້າຈຸ່ມນໍ້າເຢັນໝາດໆໃສ່ຢູ່ເທິງບ່ອນສັກຢາ ເພື່ອບັນເທົາອາການເຈັບປວດ.
- ກິນຢາ ພາຣາເຊຕາມອນ ຖ້າເຈັບປວດ.
- ດື່ມນໍ້າຫຼາຍຂຶ້ນ.

**ຖ້າລູກທ່ານເກີດມີປະຕິກິຣິຍາທີ່ທ່ານເປັນກັງວົນ ກະລຸນາຕິດຕໍ່ນາຍໝໍໃນທ້ອງຖິ່ນຂອງທ່ານ**

NSW GOVERNMENT


220732-2-15



NSW GOVERNMENT

# ໃບຍິນຍອມສຳລັບການສັກຢາປ້ອງກັນໂຣກໂປລີໂອ

ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ ກະລຸນາຂຽນເປັນ**ຕົວພິມ**ໂດຍໃຊ້ປາກກາສີດຳ ຫຼື ສີຟ້າ.

## 1. ລາຍລະອຽດຂອງນັກຮຽນ

ນາມສະກຸນ

ຊື່

ວັນ ເດືອນ ປີເກີດ ___ / ___ / 2 0 __

ເພດ ☐ ຜູ້ຊາຍ ☐ ແມ່ຍິງ ☐ ບໍ່ກຳນົດ/ລະຫວ່າງສອງເພດ/ບໍ່ລະບຸ

ຊັ້ນຮຽນ

ຊື່ຂອງໂຮງຮຽນ

ນຳເບີຂອງ ເມດີແຄຣ໌

☐ ໝາຍເລກທີ່ຢູ່ໃກ້ຊື່ຂອງລູກທ່ານຢູ່ໃນບັດ ເມດີແຄຣ໌

## 2. ສະຖານະພາບໃນການມີເຊື້ອຊາດເປັນຄົນພື້ນເມືອງ

☐ ບໍ່ແມ່ນ ☐ ແມ່ນ, ເປັນຊາວອາບໍຣິຈິໂນລ ☐ ແມ່ນ, ເປັນຊາວ ທໍເຣສເຕຣດໄອແລນເດີ ☐ ແມ່ນ, ເປັນທັງຊາວ ອາບໍຣິຈິໂນລ ແລະ ທໍເຣສເຕຣດ ໄອແລນເດີ

## 3. ລາຍລະອຽດຂອງທ່ານ - ພໍ່ແມ່ ຫຼື ຜູ້ປົກຄອງ

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເອົາໃຫ້ກ່ຽວກັບ ຜົນປະໂຍດ ແລະ ບັນດາອາການຂ້າງຄຽງທີ່ອາດຈະມີ ຂອງ ການສັກຢາປ້ອງກັນໂຣກ ໂປລີໂອ.

ຂ້ອຍໃຫ້ການຍິນຍອມນະທີ່ນີ້ສຳລັບລູກຂ້ອຍທີ່ມີຊື່ຢູ່ຂ້າງເທິງນີ້ ເພື່ອໃຫ້ໄດ້ຮັບການສັກຢາປ້ອງກັນໂຣກໂປລີໂອ ຊຸດນຶ່ງທີ່ມີ 2 ຂນາດ.

ຂ້ອຍປະຕິຍານ ຕາມທີ່ຂ້ອຍຮູ້ດີທີ່ສຸດ ວ່າ ລູກຂອງຂ້ອຍ:

1. ບໍ່ເຄີຍມີອາການພູມແພ້ຢ່າງແຮງຫຼັງຈາກການສັກ ຢາປ້ອງກັນໂຣກໃດໆ.
2. ບໍ່ມີຄວາມຮູ້ສຶກໄວຕໍ່ອາການແພ້ອັນຮ້າຍແຮງຕໍ່ສ່ວນປະສົມຂອງຢາສັກປ້ອງກັນໂຣກທີ່ຢູ່ໃນບັນຊີ ຂອງປື້ມຂໍ້ມູນ ສຳລັບພໍ່ແມ່ທີ່ຄັດຕິດມານີ້.
3. ປັດຈຸບັນບໍ່ໄດ້ຖືພາ.

ຊື່ພໍ່ແມ່/ຜູ້ປົກຄອງ (ຕົວຢ່າງ: JOHN SMITH)

ທີ່ຢູ່ (ຕົວຢ່າງ: 5 SMITH LANE)

ຄຸ້ມ

ຣະຫັດໄປສະນີ

ນຳເບີໂທຣະສັບມືຖື

ເລກໂທຣະສັບຕິດຕໍ່ທີ່ດີອີກເລກນຶ່ງ (ຮວມທັງຣະຫັດເຂດ ຕົວຢ່າງ: 02)

ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ

✕

ວັນທີ ___ / ___ / 2 0 __

## ບັນທຶກການສັກຢາປ້ອງກັນໂຣກໂປລີໂອ

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

### ສຳລັບຫ້ອງການໃຊ້ເທົ່ານັ້ນ

**ຂະໜາດຢາ 1**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ)

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ

×

ວັນທີ __ / __ 2 0 __

**ຂະໜາດຢາ 2**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ)

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ

×

ວັນທີ __ / __ 2 0 __

**ຄວາມເຫັນຂອງພະຍາບານ**

ເຫດຜົນທີ່ບໍ່ສັກຢາ

- ☐ ຂາດໂຮງຮຽນ
- ☐ ປະຕິເສດ
- ☐ ບໍ່ສະບາຍ
- ☐ ບໍ່ມີລາຍເຊັນ
- ☐ ຖອນການຍິນຍອມ
- ☐ ອື່ນໆ

## **ພໍ່ແມ່/ຜູ້ປົກຄອງ** ບັນທຶກການສັກຢາປ້ອງກັນໂຣກໂປລີໂອ

### ບັນທຶກການສັກຢາປ້ອງກັນໂຣກໂປລີໂອ — ຂະໜາດຢາ 1

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

**ສຳລັບຫ້ອງການໃຊ້ເທົ່ານັ້ນ**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ

×

ວັນທີ __ / __ 2 0 __

### ບັນທຶກການສັກຢາປ້ອງກັນໂຣກໂປລີໂອ — ຂະໜາດຢາ 2

✍ ໃຫ້ພໍ່ແມ່/ຜູ້ປົກຄອງ ຂຽນຕື່ມ

**ຊື່ຂອງນັກຮຽນ** (ຕົວຢ່າງ: JANE SMITH)

**ສຳລັບຫ້ອງການໃຊ້ເທົ່ານັ້ນ**

**ແຂນ** ☐ ຊ້າຍ ☐ ຂວາ

ເວລາຂອງການສັກຢາ (24ຊົ່ວໂມງ) __ __ : __ __

ໝາຍເລກຂອງຢາສັກ

ລາຍເຊັນຂອງພະຍາບານ

×

ວັນທີ __ / __ 2 0 __

# ຄຳຖະແຫຼງ ເລື່ອງ ຄວາມເປັນສ່ວນຕົວ

## ຄວາມຮັບຜິດຊອບຂອງພວກເຮົາ

ພວກເຮົາໃຫ້ຄຳໝັ້ນສັນຍາວ່າຈະຄຸ້ມຄອງຂໍ້ມູນສ່ວນຕົວຂອງທ່ານໂດຍໃຫ້ສອດ ຄ່ອງກັບກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ.

ຄຳຖະແຫຼງນີ້ຈະອະທິບາຍແກ່ທ່ານວ່າພວກເຮົາເກັບກຳຂໍ້ມູນສ່ວນຕົວກ່ຽວກັບທ່ານແລະລູກທ່ານ ດ້ວຍວິທີໃດ ແລະ ເປັນຫຍັງ, ທ່ານຈະສາມາດເຂົ້າເບິ່ງຂໍ້ມູນນີ້ໄດ້ຢ່າງໃດ ແລະ ຂໍ້ມູນນີ້ຈະຖືກນຳໃຊ້ແບບໃດພາຍໃນບໍລິການອະນາໄມຊຸມຊົນຣັດ ນຊວ ຫຼື ຈະຖືກເປີດເຜີຍຕໍ່ພາກສ່ວນອື່ນໆແບບໃດ. ຂໍ້ມູນສ່ວນຕົວຂອງທ່ານ ຮວມທັງຣາຍລະອຽດສ່ວນຕົວກ່ຽວກັບທ່ານ ແລະ ລູກທ່ານ ແລະ ທັງຂໍ້ມູນສ່ວນຕົວດ້ານສຸຂພາບທີ່ພົວພັນກັບການສັກຢາປ້ອງກັນໂຣກຂອງລູກທ່ານ.

## ການເກັບກຳ

ຂໍ້ມູນສ່ວນໄດ້ຖືກເກັບກຳເອົາໄວ້ກໍເພື່ອວ່າລູກທ່ານຈະສາມາດໄດ້ຮັບບັນດາບໍລິການການສັກຢາປ້ອງກັນໂຣກທີ່ເໝາະສົມ.

ມີພຽງຂໍ້ມູນທີ່ກ່ຽວພັນແລະຈຳເປັນສຳລັບການສັກຢາປ້ອງກັນໂຣກຂອງລູກທ່ານ ແລະ ຂໍ້ມູນເພື່ອນຳມາໃຊ້ໃນວຽກງານບໍຣິຫານ ການບໍຣິການ ສັກຢາປ້ອງກັນໂຣກເທົ່ານັ້ນທີ່ຈະຖືກເກັບກຳ.

ຂໍ້ມູນຈະຖືກເກັບກຳຈາກທ່ານແລະລູກທ່ານໂດຍກົງຖ້າຫາກເປັນໄປໄດ້. ຂໍ້ມູນນີ້ອາດຈະຖືກເກັບກຳມາຈາກໂຮງຮຽນຂອງລູກທ່ານແລະຈາກນັກວິຊາການດ້ານສຸຂພາບອື່ນໆຊຶ່ງໄດ້ເຄີຍຮັກສາລູກທ່ານ. ໃນກໍຣະນີສຸກເສີນຂໍ້ມູນກໍຍັງອາດຈະຖືກເກັບກຳຈາກສະມາຊິກຄອບຄົວອີກຄົນນຶ່ງ ຈາກໝູ່ເພື່ອນ ຜູ້ໃຫ້ການ ດູແລ ຫຼື ຄົນອື່ນໆທີ່ສາມາດຊ່ວຍພວກເຮົາໃນການໃຫ້ການຮັກສາທີ່ດີທີ່ສຸດແກ່ລູກທ່ານ.

## ຄວາມປອດໄພຂອງຂໍ້ມູນທີ່ໄດ້ຖືກເກັບກຳມາ

ຂໍ້ມູນສ່ວນຕົວອາດຈະຖືກເກັບໄວ້ໃນຫຼາຍວິທີທາງ. ຕາມທັມມະດາສ່ວນຫຼາຍແລ້ວ ຂໍ້ມູນນີ້ອາດຈະຖືກເກັບໄວ້ແບບເປັນເຈັ້ຍບັນທຶກສຸຂພາບ ແລະ/ຫຼື ເປັນບັນທຶກທາງການແພດແບບອີເລັກໂທຣນິກຊຶ່ງປະກອບເປັນສ່ວນນຶ່ງຂອງຂໍ້ມູນທາງຄອມພິວເຕີທີ່ປອດໄພ. ພວກເຮົາເຮັດຕາມກົດລະບຽບ ແລະ ນະໂຍບາຍກ່ຽວກັບການເກັບມ້ຽນຂໍ້ມູນສ່ວນຕົວທຸກຮູບແບບໃຫ້ປອດໄພຢ່າງເຄັ່ງຄັດເພື່ອຄຸ້ມຄອງ ຂໍ້ມູນຂອງທ່ານຈາກການເສັຍຫາຍ, ການຖືກເຂົ້າເບິ່ງ ແລະ ການຖືກນຳໃຊ້ ໂດຍ ບໍ່ໄດ້ຮັບອະນຸຍາດ.

## ການນຳໃຊ້ ແລະ ການເປີດເຜີຍ

ຂໍ້ມູນສ່ວນຕົວຂອງທ່ານ ຫຼື ຂອງລູກທ່ານອາດຈະຖືກນຳໃຊ້ໂດຍ ບໍຣິການ ອະນາ ໄມຊຸມຊົນຣັດ ນຊວ, ຫຼື ຖືກເປີດເຜີຍອອກໄປຂ້າງນອກ ບໍຣິການ ອະນາໄມ, ເພື່ອສາມາດເຮັດໃຫ້ມີການດູແລແລະການປິ່ນປົວອັນເໝາະສົມໃຫ້ແກ່ທ່ານ. ຕົວ ຢ່າງເຊັ່ນ, ຂໍ້ມູນຂອງທ່ານອາດຈະຖືກນຳໃຊ້ ຫຼື ເປີດເຜີຍຕໍ່ນາຍໝໍຂອງທ່ານ, ບໍຣິ ການການປິ່ນປົວສຸຂພາບອື່ນໆ ຫຼື ໂຮງໝໍ, ບໍຣິການ ຣົດໂຮງໝໍ ຣັດ ນຊວ, ຕໍ່ ນາຍໝໍ ຊ່ຽວຊານພິເສດສະເພາະເພື່ອເອົາການແນະນຳສົ່ງຕໍ່ ຫຼື ເພື່ອເຮັດການກວດເລືອດ. ນອກຈາກນີ້ແລ້ວ ຂໍ້ມູນສ່ວນຕົວນີ້ກໍຍັງອາດຈະຖືກນຳໃຊ້ ແລະ ເປີດເຜີຍເພື່ອ ຈຸດປະສົງທີ່ກ່ຽວພັນກັບການດຳເນີນການຂອງບໍຣິການ ອະນາໄມ ຣັດ ນຊວ ແລະ ການປິ່ນປົວຮັກສາຄົນໄຂ້ນອກຂອງພວກເຮົາ, ກວມເຖິງ ກອງທຶນ, ການ ວາງແຜນ, ຄວາມປອດໄພ, ແລະ ບັນດາກິຈກັມຕ່າງໆເພື່ອປັບປຸງຄຸນນະພາບ ໃຫ້ດີຂຶ້ນ.

ຂໍ້ມູນສ່ວນຕົວຕ້ອງຖືກເປີດເຜີຍຕໍ່ຫ້ອງການຕ່າງໆຂອງ ຣັຖບານ ຣັດ ແລະ ຣັຖບານກາງເພື່ອໃຫ້ສອດຄ່ອງກັບ ບັນດາກົດໝາຍກ່ຽວກັບການລາຍງານເລື້ອງ ພະຍາດຕ່າງໆທີ່ຕ້ອງແຈ້ງຕໍ່ທາງການ, ເພື່ອໃຫ້ລາຍລະອຽດຕໍ່ ແມດິແຄຣ໌ ແລະ ສະຖິຕິຂອງການສັກຢາປ້ອງກັນໂຣກ.

ພວກເຮົາຍັງອາດຈະຕ້ອງນຳໃຊ້ຂໍ້ມູນສ່ວນຕົວຂອງທ່ານ ເພື່ອຕິດຕໍ່ທ່ານກ່ຽວກັບ ການສຳຫຼວດເລື້ອງຄວາມພໍໃຈຂອງລູກຄ້າ ແລະ ເພື່ອຕິດຕາມເບິ່ງຄວາມປອດໃພ ຂອງ ຢາວັກຊີນ. ການເຂົ້າຮ່ວມ ນີ້ແມ່ນເປັນການສມັກໃຈ ແລະ ຜູ້ທີ່ບໍ່ຮ່ວມກໍຈະບໍ່ກະທົບກະເທືອນຕໍ່ການ ດູແລສຸຂພາບທີ່ໄດ້ເອົາໃຫ້ແລ້ວ.

## ການເຂົ້າເຖິງຂໍ້ມູນຂອງທ່ານ

ທ່ານມີສິດໃນການຂໍເບິ່ງຂໍ້ມູນຂອງທ່ານທີ່ພວກເຮົາເກັບມ້ຽນໄວ້ ແລະຂອງລູກທ່ານອີກນຳ. ທ່ານອາດຈະຕ້ອງເສັຍຄ່າທຳນຽມຖ້າທ່ານຕ້ອງການສຳເນົາຂອງຂໍ້ມູນສ່ວນຕົວຂອງທ່ານ ຫຼື ບັນທຶກທາງການແພດ.

## ເພື່ອເອົາຂໍ້ມູນເພີ້ມຕື່ມ ແລະ ຕິດຕໍ່ພວກເຮົາ

ເພື່ອເອົາຂໍ້ມູນເພີ້ມຕື່ມເລື້ອງວ່າ ຂໍ້ມູນສ່ວນຕົວຂອງທ່ານຈະຖືກຈັດການຢ່າງໃດ, ກະຣຸນາເບິ່ງ ປື້ມຄຳແນະນຳກ່ຽວກັບເລື້ອງຄວາມເປັນສ່ວນຕົວດ້ານສຸຂພາບ ຂອງຣັດ ນຊວ ສຳລັບຂໍ້ມູນກ່ຽວກັບສຸຂພາບ: www.health.nsw.gov.au/patients/privacy

ຖ້າທ່ານມີຄຳຖາມ ຫຼື ມີການຮ້ອງຮຽນໃດໆ ກ່ຽວກັບຄວາມເປັນສ່ວນຕົວຂອງຂໍ້ມູນສ່ວນຕົວຂອງທ່ານ ກະຣຸນາຕິດຕໍ່ ພະແນກ ອະນາໄມຊຸມຊົນ ໃນທ້ອງຖິ່ນຂອງທ່ານ ຕາມໂທຣະສັບໝາຍເລກ 1300 066 055.

October 2022 © NSW Health. SHPN (HP NSW) 220726-P-15